**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ນະຄອນຫລວງວຽງຈັນ

ພະແນກກະສິກຳ ແລະ ປ່າໄມ້

ຂະແໜງລ້ຽງສັດ ແລະ ການປະມົງ

# ບົດສະຫລຸບ

## ວຽກງານລ້ຽງສັດ ແລະ ການປະມົງ ປະຈຳປີ 2021 ແລະ ທິດທາງແຜນການ ປະຈຳປີ 2022, ຂອງຂະແໜງລ້ຽງສັດ ແລະ ການປະມົງ ປະຈຳນະຄອນຫລວງວຽງຈັນ

**ນະຄອນຫຼວງວຽງຈັນ, ມັງກອນ 2022**

# ສາລະບານ


ສາລະບານ ........ I
1. ສະພາບລວມ ........ 1
1.1. ດ້ານແນວຄິດການເມືອງ ........ 1
1.2. ດ້ານການຈັດຕັ້ງ ........ 2
1.3. ການເຄື່ອນໄຫວສ້າງຂະບວນການ ........ 2
2. ການເຄື່ອນໄຫວວຽກງານຈຸດສຸມ ໃນຂະແໜງການ ........ 2
2.1. ການຜະລິດສະບຽງອາຫານ ........ 2
2.1.1. ວຽກງານລ້ຽງສັດ ........ 2
1) ການຄຸ້ມຄອງການລ້ຽງສັດ ........ 2
2) ການຜະລິດແນວພັນສັດ ........ 3
3) ການຜະລິດອາຫານສັດ ........ 3
4) ການຄຸ້ມຄອງມາດຕະຖານຟາມ, ຂຶ້ນທະບຽນພິມສັດ ແລະ ຄຸນນະພາບອາຫານສັດ ........ 3
5) ການແກ້ໄຂບັນຫາການລ້ຽງສັດ ແລະ ຜົນກະທົບຈາກໄພທຳມະຊາດ ........ 4
2.1.2. ວຽກງານປະມົງ ........ 4
1) ການຄຸ້ມຄອງການລ້ຽງປາ ແລະ ສັດນ້ຳ ........ 4
2) ການຜະລິດແນວພັນປາ ........ 4
3) ການຜະລິດອາຫານປາ ........ 4
4) ການຄຸ້ມຄອງຄຸນນະພາບອາຫານປາ ........ 5
5) ການແກ້ໄຂບັນຫາການລ້ຽງສັດນ້ຳ ແລະ ຜົນກະທົບຈາກໄພທຳມະຊາດ ........ 5
6) ການຄຸ້ມຄອງການປະມົງປະຈຳພື້ນທີ່ແຫຼ່ງນ້ຳ ........ 5
2.1.3. ວຽກງານສັດຕະວະແພດ ........ 5
1) ການສັກຢາກັນພະຍາດສັດ ແລະ ການບໍລິການສັດຕະວະແພດ ........ 5
2) ການເຝົ້າລະວັງພະຍາດສັດ ........ 5
3) ການລະບາດ, ຄວບຄຸມ ແລະ ສະກັດກັ້ນພະຍາດສັດ ........ 6
4) ວຽກງານການກວດກາສັດຕະວະແພດ ........ 6
5) ການກວດກາອະນາໄມຊີ້ນ ........ 6
6) ວິໄຈຢາຕ້ານເຊື້ອຕົກຄ້າງ ແລະ ສານເຄມີປົນເປື້ອນ ........ 7
7) ການກວດກາການສົ່ງອອກ, ນຳເຂົ້າ ແລະ ສົ່ງຜ່ານ ........ 7
2.1.4. ການສະໜອງທາດຊີ້ນ ........ 7
2.2. ການຜະລິດເປັນສິນຄ້າ ........ 8
2.2.1. ການລ້ຽງສັດໃຫຍ່ເປັນສິນຄ້າ ........ 8
2.2.2. ການລ້ຽງງູໝູເປັນສິນຄ້າ ........ 8
2.2.3. ການລ້ຽງສັດປີກເປັນສິນຄ້າ ........ 8
2.2.4. ການລ້ຽງສັດນ້ຳເປັນສິນຄ້າ ........ 8

2.2.5. ການຂຶ້ນທະບຽນຟາມ ........ 8
2.3. ການຊຸກຍູ້ການຜະລິດລະດູແລ້ງ, ວຽກງານຈຸດສຸມທີ່ງພຽງວຽງຈັນ ແລະ ວຽກງານສາມສ້າງ ........ 9
2.4. ສະມາຄົມລ້ຽງງົວນະຄອນຫຼວງວຽງຈັນ ........ 9
2.5. ການພັດທະນາພື້ນຖານໂຄງລ່າງ ແລະ ພື້ນຖານວັດຖຸເຕັກນິກ ........ 9
2.6. ການຮ່ວມມື ແລະ ລົງທຶນ ........ 9
2.7. ການເຜີຍແຜ່ ແລະ ຜັນຂະຫຍາຍກົດໝາຍ ........ 9
2.8. ການພັດທະນາບຸກຄະລາກອນ ........ 9
2.9. ການບໍລິຫານເອກະສານ ຂາເຂົ້າ-ຂາອອກ ........ 10
3. ຈຸດດີ, ຈຸດອ່ອນ ແລະ ບົດຮຽນທີ່ຖອດຖອນໄດ້ ........ 10
3.1. ຈຸດດີ ........ 10
3.2. ຈຸດອ່ອນ ........ 11
3.3. ບົດຮຽນທີ່ຖອດຖອນໄດ້ ........ 11
4. ທິດທາງແຜນການ ແລະ ຄາດໝາຍສູ້ຊົນ ປະຈໍາປີ 2022 ........ 11
4.1. ເປົ້າໝາຍ ........ 11
4.1.1. ເປົ້າໝາຍລວມ ........ 11
4.1.2. ເປົ້າໝາຍທີ 1 : ການຜະລິດສະບຽງອາຫານ ........ 12
4.1.3. ເປົ້າໝາຍທີ 2 : ການຜະລິດເປັນສິນຄ້າ ........ 12
4.2. ເນື້ອໃນວຽກງານຈຸດສຸມ ແລະ ບັນດາມາດຕະການຈັດຕັ້ງປະຕິບັດ ........ 12
4.2.1. ມາດຕະການສໍາລັບການຜະລິດສະບຽງອາຫານ ........ 12
1) ມາດຕະການດ້ານການລ້ຽງສັດ ........ 12
2) ມາດຕະການດ້ານການປະມົງ ........ 13
3) ມາດຕະການທາງດ້ານສັດຕະວະແພດ ........ 13
4.2.2. ມາດຕະການສໍາລັບການຜະລິດເປັນສິນຄ້າ ........ 14
1) ການລ້ຽງງົວເປັນສິນຄ້າ ........ 14
2) ການລ້ຽງໝູເປັນສິນຄ້າ ........ 15
3) ການລ້ຽງສັດປີກເປັນສິນຄ້າ ........ 15
4) ການລ້ຽງປາເປັນສິນຄ້າ ........ 15
5) ການຜະລິດແນວພັນສັດ ........ 15
6) ການຜະລິດອາຫານສັດ ........ 15
4.3. ແຜນງານ ແລະ ໂຄງການສະໜັບສະໜູນ ........ 16
4.4. ວິທີຈັດຕັ້ງປະຕິບັດ, ການຕິດຕາມກວດກາ ແລະ ປະເມີນຜົນ ........ 16
4.4.1. ການຈັດຕັ້ງປະຕິບັດ ........ 16
4.4.2. ການຕິດຕາມກວດກາ ແລະ ການປະເມີນຜົນ ........ 17
ເອກະສານຊ້ອນທ້າຍ ........ 18

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ນະຄອນຫລວງວຽງຈັນ

ພະແນກກະສິກຳ ແລະ ປ່າໄມ້

ຂະແໜງລ້ຽງສັດ ແລະ ການປະມົງ ເລກທີ_______/ຂລປ.ນວ

ວັນທີ………………………

# ບົດສະຫລຸບ

## ວຽກງານລ້ຽງສັດ ແລະ ການປະມົງ ປະຈຳປີ 2021 ແລະ ທິດທາງແຜນການ ປະຈຳປີ 2022, ຂອງຂະແໜງລ້ຽງສັດ ແລະ ການປະມົງ ປະຈຳນະຄອນຫລວງວຽງຈັນ

ເພື່ອຈັດຕັ້ງຜັນຂະຫຍາຍທິດທາງກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກ, ແຜນການພັດທະນາເສດກິດ-ສັງຄົມ ຄັ້ງທີ IX ຂອງລັດຖະບານ ສປປ ລາວ, ມະຕິກອງປະຊຸມໃຫຍ່ຄັ້ງທີ VII ຂອງອົງຄະນະພັກນະຄອນຫຼວງວຽງ ຈັນກໍ່ຄື ແຜນພັດທະນາເສດຖະກິດ-ສັງຄົມ 06 ປີ ຄັ້ງທີ IX (2021-2025) ຂອງນະຄອນຫຼວງວຽງຈັນ ໃຫ້ປະກົດຜົນເປັນຈິງ.

### 1. ສະພາບລວມ

#### 1.1. ດ້ານແນວຄິດການເມືອງ

ຂະແໜງລ້ຽງສັດ ແລະ ການປະມົງນະຄອນຫລວງວຽງຈັນ ແມ່ນຂະແໜງໜຶ່ງທີ່ເປັນເສນາທິການດ້ານການລ້ຽງສັດ ແລະ ການປະມົງ ໃຫ້ສາຍຕັ້ງ ແລະ ສາຍຂວາງ, ໂດຍລວມແລ້ວພະນັກງານມີແນວຄິດອຸ່ນອຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນຳພາ ແລະ ປະຕິບັດຕາມແນວທາງນະໂຍບາຍຂອງ ພັກ-ລັດ, ເຂົ້າຮ່ວມເຊື່ອມຊຶມມະຕິຂອງພັກ, ຮໍ່າຮຽນລະບຽບກົດໝາຍຂອງລັດ ແລະ ຮັບຟັງການເຜີຍແຜ່ເອກະສານຢ່າງເປັນປະຈຳ, ເປັນເຈົ້າການນຳເອົາແນວທາງນະໂຍບາຍຂອງພັກມາຜັນຂະຫຍາຍເຂົ້າຮັບໃຊ້ໜ້າທີ່ການເມືອງ, ໜ້າທີ່ວິຊາສະເພາະໃຫ້ປະກົດຜົນເປັນຈິງ.

ປະຕິບັດຕາມຫຼັກການລວມສູນປະຊາທິປະໄຕ ເຮັດວຽກເປັນໝູ່ຄະນະ, ບຸກຄົນຮັບຜິດຊອບຕາມຫຼັກການຂອງພັກວາງອອກ, ມີການແບ່ງວຽກໃນຄະນະພັກ ແລະ ສະມາຊິກພັກ-ພະນັກງານແຕ່ລະສະຫາຍຢ່າງຂາດຕົວ, ນຳພາການຈັດຕັ້ງປະຕິບັດແຜນວຽກວິຊາສະເພາະ ແລະ ນຳພາການແກ້ໄຂບັນຫາໃນວຽກງານ, ມີການຊຸກຍູ້ການປະຕິບັດແຜນການ, ຕິດຕາມ, ກວດກາ ໂຄງການທີ່ວາງອອກ ແລະ ປະເມີນຜົນແຕ່ລະດ້ານ ໃນໜ້າວຽກທີ່ໄດ້ມອບໝາຍ ແລະ ຊອກຫາທາງອອກ ປະຕິບັດຕາມຕົວເລກຄາດໝາຍທີ່ວາງໄວ້.

### 1.2. ດ້ານການຈັດຕັ້ງ

<u>ເບື້ອງພັກ</u>: ໜ່ວຍພັກຂະແໜງລ້ຽງສັດ ແລະ ການປະມົງ ມີສະມາຊິກພັກຈຳນວນ 21 ສະຫາຍ, ຍິງ 05 ສະຫາຍ (ໃນນັ້ນມີສະມາຊິກພັກສຳຮອງ 01 ສະຫາຍ ຍິງ 01 ສະຫາຍ).

<u>ເບື້ອງລັດ</u>: ຂະແໜງລ້ຽງສັດ ແລະ ການປະມົງນະຄອນຫລວງວຽງຈັນ ປະກອບດ້ວຍ 04 ໜ່ວຍງານ ຄື: ໜ່ວຍງານບໍລິຫານ-ແຜນການ, ໜ່ວຍງານຄຸ້ມຄອງການລ້ຽງສັດ, ໜ່ວຍງານຄຸ້ມຄອງການປະມົງ, ໜ່ວຍງານສັດຕະວະແພດ ແລະ ດ່ານກວດກາສັດຕະວະແພດສາກົນ. ກົງຈັກການຈັດຕັ້ງພາຍໃນຂະແໜງປະກອບມີຫົວໜ້າຂະແໜງ 01 ທ່ານ, ຮອງຫົວໜ້າຂະແໜງ 03 ທ່ານ ແລະ ລວມພະນັກງານທັງ27 ທ່ານ ເປັນຍິງ 06 ທ່ານ ແລະ ມີວິຊາການສັນຍາຈ້າງ 20 ທ່ານ ເປັນຍິງ 03 ທ່ານ.

### 1.3. ການເຄື່ອນໄຫວສ້າງຂະບວນການ

ພະນັກງານພາຍໃນຂະແໜງລ້ຽງສັດ ແລະ ການປະມົງ ໄດ້ປະຕິບັດຕາມພາລະບົດບາດ, ສິດໜ້າທີ່, ປະກອບສ່ວນເຄື່ອນໄຫວວິຊາສະເພາະຂອງຕົນ, ເຂົ້າຮ່ວມສ້າງຂະບວນການຕ່າງໆທີ່ພະແນກກະສິກຳ ແລະ ປ່າໄມ້ນະຄອນຫລວງວຽງຈັນ ກໍ່ຄືນະຄອນຫລວງວຽງຈັນ ແລະ ກະຊວງກະສິກຳ ແລະ ປ່າໄມ້ ຈັດຕັ້ງຂຶ້ນ ເປັນຕົ້ນແມ່ນເຂົ້າຮ່ວມຮັບຟັງປະຖະກະຖາ ປະຖະກະຖາ ວັນຊາດທີ 2 ທັນວາ; ວັນສ້າງຕັ້ງກອງທັບປະຊາຊົນປະຕິວັດລາວ 20 ມັງກອນ ຄົບຮອບ 72 ປີ ແລະ ເຂົ້າຮ່ວມຮັບຟັງປະຖະກະຖາວັນແມ່ຍິງສາກົນ ຄົບຮອບ 111 ປີ ແລະ ຂະບວນການອື່ນໆ ສະມາຊິກພັກ ແລະ ພະນັກງານຂະແໜງ ເຂົ້າຮ່ວມ 63 ເທື່ອຄົນ ເປັນຍິງ 22 ເທື່ອຄົນ.

## 2. ການເຄື່ອນໄຫວວຽກງານຈຸດສຸມ ໃນຂະແໜງການ

### 2.1. ການຜະລິດສະບຽງອາຫານ

#### 2.1.1. ວຽກງານລ້ຽງສັດ

1) ການຄຸ້ມຄອງການລ້ຽງສັດ

ໃນການຕອບສະໜອງຄວາມຕ້ອງການບໍລິໂພກທາດຊີ້ນ ຂອງສັງຄົມຢູ່ນະຄອນຫລວງວຽງຈັນໄດ້ຊຸກຍູ້ຂະບວນການຜະລິດ ຂອງຊາວກະສິກອນທີ່ລ້ຽງສັດ ແບບຄອບຄົວ ແລະ ການລ້ຽງແບບເປັນຟາມ ໃຫ້ຂະຫຍາຍຕົວໄປຕາມແຜນພັດທະນາ ເສດຖະກິດ-ສັງຄົມ ທີ່ນະຄອນຫລວງວຽງຈັນວາງອອກ, ຮັບປະກັນໄດ້ດ້ານປະລິມານ ແລະ ຄຸນນະພາບ, ປະຈຸບັນນະຄອນຫລວງວຽງຈັນມີຈຳນວນສັດລ້ຽງ ຄື: ມ້າ 49 ໂຕ, ງົວ 96.624 ໂຕ, ຄວາຍ 15.449 ໂຕ, ແບ້ 33.232 ໂຕ, ໝູ 140.676 ໂຕ ແລະ ສັດປີກ 2.730.034 ໂຕ ສົມທຽບໃສ່ແຜນການຂະຫຍາຍຝູງສັດ ຄື: ງົວປະຕິບັດໄດ້ 110,18%, ຄວາຍປະຕິບັດໄດ້ 103,95%, ແບ້ປະຕິບັດໄດ້ 169,03%, ໝູປະຕິບັດໄດ້ 80,8% ແລະ ສັດປີກປະຕິບັດໄດ້ 120,2%. ການລ້ຽງໝູຫຼຸດລົງ ເນື່ອງມາຈາກສະພາບການລະບາດພະຍາດອະຫິວາ ໝູອາຟຣິກາຢູ່ໃນ ສປປ ລາວ ແລະ ປະເທດໃກ້ຄຽງ ແລະ ການຍ້າຍຖານການລ້ຽງໝູຊີ້ນໄປຕ່າງແຂວງ, ແຕ່ການສະໜອງຊີ້ນໝູ ແມ່ນພຽງພໍກັບຄວາມຕ້ອງການ ແລະ ຍັງເປັນສິນຄ້າສົ່ງອອກ. ສ່ວນການລ້ຽງ ງົວ, ຄວາຍ, ແບ້ ແລະ ສັດປີກຍັງປະຕິບັດໄດ້ລື່ນແຜນການ ແຕ່ບໍ່ພຽງພໍກັບຄວາມຕ້ອງການ ຈຶ່ງຈຳເປັນຕ້ອງໄດ້ນຳເຂົ້າຈາກຕ່າງແຂວງ ແລະ ຕ່າງປະເທດຈຳນວນໜຶ່ງ.

ສົມທົບກັບຂະແໜງພັດທະນາຊົນນະບົດ ແລະ ສະຫະກອນ ແລະ ຫ້ອງການກະສິກຳ ແລະ ປ່າໄມ້ ປະຈຳເມືອງ ນາຊາຍທອງ, ໄຊທານີ, ສັງທອງ ແລະ ປາກງື່ມ ເປີດກອງປະຊຸມປຶກສາຫາລືກັບຜູ້ປະກອບການລ້ຽງສັດປີກ ເພື່ອກະກຽມສ້າງກຸ່ມລ້ຽງງົວ 01 ກຸ່ມ ມີຜູ້ສົນໃຈເຂົ້າຮ່ວມສ້າງຕັ້ງກຸ່ມ 08 ທ່ານ, ກຸ່ມລ້ຽງແບ້ 07 ກຸ່ມ

ມີຜູ້ສົນໃຈເຂົ້າຮ່ວມສ້າງຕັ້ງກຸ່ມ 72 ທ່ານ, ກຸ່ມລ້ຽງໝູ 01 ກຸ່ມ ມີຜູ້ສົນໃຈເຂົ້າຮ່ວມສ້າງຕັ້ງກຸ່ມ 13 ທ່ານ ແລະ ກຸ່ມລ້ຽງໄກ່ພັນໄຂ່ 04 ກຸ່ມການຜະລິດ ມີຜູ້ສົນໃຈເຂົ້າຮ່ວມສ້າງຕັ້ງກຸມ 67 ທ່ານ.

2) ການຜະລິດແນວພັນສັດ

ແນວພັນສັດແມ່ນປັດໄຈສຳຄັນ ເປັນຕົວຊີ້ວັດໃຫ້ແກ່ການສະໜອງທາດຊີ້ນ, ໂດຍສະເພາະແນວພັນທີ່ໃຫ້ຜົນຜະລິດສູງເປັນຕົ້ນແມ່ນໝູ ແລະ ສັດປີກ, ປະຈຸບັນນະຄອນຫລວງວຽງຈັນ ມີໝູພໍ່ແມ່ພັນ 14.119 ໂຕ (ພໍ່ພັນຈຳນວນ 259 ໂຕ ແລະ ແມ່ພັນ 13.860 ໂຕ), ໄກ່ພໍ່ແມ່ພັນ 24.500 ໂຕ (ພໍ່ພັນຈຳນວນ 2.500 ໂຕ ແລະ ແມ່ພັນ 22.000 ໂຕ). ສາມາດຜະລິດໝູນ້ອຍໄດ້ 271.750 ໂຕ ແລະ ຜະລິດໄກ່ນ້ອຍໄດ້ 1.350.000 ໂຕ ສົມທຽບໃສ່ປີຜ່ານມາ ການຜະລິດໝູນ້ອຍເຫັນວ່າເພີ້ມຂຶ້ນ 17.330 ໂຕ ເທົ່າກັບ 6.81%, ຜະລິດໄກ່ນ້ອຍປະຕິບັດໄດ້ 100% ແຕ່ປະລິມານດັ່ງກ່າວຍັງບໍ່ທັນພຽງພໍກັບຄວາມຕ້ອງການຂອງຜູ້ລ້ຽງເທື່ອ ເພາະໝູພໍ່ແມ່ພັນສ່ວນໃຫຍ່ເປັນການຜະລິດຈາກຟາມຂອງບໍລິສັດ ເຊັ່ນ: ຊີພີລາວ ແລະ ເບທາໂກລາວ ເຊິ່ງຜະລິດສະເພາະຮັບໃຊ້ການລ້ຽງໃນຟາມ ແລະ ຟາມສົ່ງເສີມຂອງຕົນເອງ ແລະ ເອກະຊົນມີພື້ນຖານໂຄງສ້າງຟາມລ້ຽງໝູຂຶ້ນ ຈຳເປັນຕ້ອງໄດ້ນຳເຂົ້າໝູນ້ອຍເຂົ້າມາລ້ຽງ ບາງຄັ້ງຈຶ່ງໄດ້ມີການນຳເຂົ້າແນວພັນມາຈາກຕ່າງແຂວງ ແລະ ຕ່າງປະເທດ.

3) ການຜະລິດອາຫານສັດ

ນະຄອນຫລວງວຽງຈັນ ມີທົ່ງຫຍ້າແບບເປັນຄັງລ້ຽງສັດ, ທົ່ງຫຍ້າທຳມະຊາດ ແລະ ທົ່ງຫຍ້າປູກຈຳນວນ 52.208,56 ເຮັກຕາ, ຍ້ອນເສດຖະກິດ-ສັງຄົມມີການຂະຫຍາຍຕົວໄວເຮັດໃຫ້ພື້ນທີ່ທົ່ງຫຍ້າລ້ຽງສັດແບບທຳມະຊາດ ຖືກຈຳກັດຮັດແຄບເຂົ້າເຊິ່ງສົ່ງຜົນກະທົບໂດຍກົງຕໍ່ຝູງສັດໃຫຍ່ ເຊັ່ນ: ງົວ, ຄວາຍ ແລະ ແບ້, ດັ່ງນັ້ນຈຶ່ງໄດ້ຊຸກຍູ້ຜູ້ປະກອບການ ແລະ ປະຊາຊົນປູກຫຍ້າອາຫານສັດແບບເປັນຟາມ ເຊິ່ງເນັ້ນໃສ່ແນວພັນຫຍ້າທີ່ໃຫ້ຜົນຜະລິດສູງທັງປະລິມານ ແລະ ຄຸນຄ່າທາງດ້ານໂພຊະນາການ ເຊັ່ນ: ຫຍ້າເນເປຍ, ຫຍ້າລູ່ຊີ ແລະ ຫຍ້າມູລາໂຕເປັນຕົ້ນ, ມາຮອດປະຈຸບັນການປູກຫຍ້າລ້ຽງສັດ ຂອງຜູ້ປະກອບການແຕ່ລະເມືອງ ໃນນະຄອນຫລວງວຽງຈັນ ມີທັງໝົດ 1.712 ເຮັກຕາ ສົ່ງເສີມການປູກຫຍ້າອາຫານສັດ ໄດ້ 383 ເຮັກຕາ ເທົ່າກັບ 76,6% ຂອງແຜນການ, ແຕ່ຍັງເຫັນໄດ້ວ່າການປູກຫຍ້າລ້ຽງສັດຂອງຊາວກະສິກອນ ກໍ່ຄືບັນດາຟາມເຫັນໄດ້ຄວາມສຳຄັນຂອງພືດອາຫານສັດ, ນອກນີ້ຍັງໄດ້ປູກຢູ່ຕາມສູນ-ສະຖານີຂອງລັດ ແລະ ຄອບຄົວຕົວແບບ ເພື່ອເປັນແຫລ່ງສະໜອງອາຫານສັດຄົງວເອື້ອງ, ບ່ອນສະໜອງແນວພັນ ແລະ ເປັນບ່ອນໃຫ້ຄວາມຮູ້ແກ່ຊາວກະສິກອນນຳໄປຈັດຕັ້ງປະຕິບັດໃນການລ້ຽງສັດຂອງຕົນ ແລະ ເລັ່ງພື້ນຟູການປູກຫຍ້າທີ່ໄດ້ຮັບຜົນກະທົບຈາກໄພທຳມະຊາດ.

ປະຈຸບັນມີໂຮງງານຜະລິດອາຫານສັດ 02 ແຫ່ງໄດ້ດຳເນີນການຜະລິດອາຫານໝູ, ອາຫານສັດປີກໄດ້ທັງໝົດ 332.842 ໂຕນ (ອາຫານໝູ 206.906 ໂຕນ ແລະ ອາຫານສັດປີກ 100.068 ໂຕນ) ທຽບໃສ່ປີຜ່ານມາ ເພີ່ມ 138.248 ໂຕນ ເທົ່າກັບ 71% (ໃນນັ້ນ ຮັບໃຊ້ພາຍໃນນະຄອນຫຼວງວຽງຈັນ 147.779 ໂຕນ ແລະ ສົ່ງໄປຕ່າງແຂວງ 183.063 ໂຕນ). ນອກນັ້ນຍັງມີໂຮງປະສົມອາຫານສັດອີກ 14 ແຫ່ງ ຜະລິດຮັບໃຊ້ຟາມຕົນເອງ ໄດ້ທັງໝົດ 7.540 ໂຕນ.

4) ການຄຸ້ມຄອງມາດຕະຖານຟາມ, ຂຶ້ນທະບຽນພິມສັດ ແລະ ຄຸນນະພາບອາຫານສັດ

ການຄຸ້ມຄອງມາດຕະຖານຟາມຂະແໜງ ໄດ້ລົງເຄື່ອນໄຫວຮ່ວມກັບໜ່ວຍງານລ້ຽງສັດ ແລະ ການປະມົງປະຈຳເມືອງ ຕິດຕາມຄືນກ່ຽວກັບ ການຈັດຕັ້ງປະຕິບັດການຂຶ້ນທະບຽນພິມສັດທີ່ລ້ຽງພາຍໃນ ແລະ ພໍ່ແມ່ພັນທີ່ນຳເຂົ້າຈາກຕ່າງປະເທດ, ໄດ້ຂຶ້ນທະບຽນພິມສັດໃຫ້ ງົວໄດ້ 670 ໂຕ ແລະ ໝູໄດ້ ຈຳນວນ 5.922 ໂຕ, ລື່ນແຜນການ 31,84%.

ໄດ້ສຸ່ມເກັບຕົວຢ່າງອາຫານສັດ ຈາກໂຮງງານຜະລິດອາຫານສັດພາຍໃນ ແລະ ອາຫານສັດທີ່ນຳເຂົ້າຈາກຕ່າງປະເທດຈຳນວນ 16 ຕົວຢ່າງ (ໃນນັ້ນ ອາຫານໝູ 9 ຕົວຢ່າງ, ອາຫານໄກ່ໄຂ່ 05 ຕົວຢ່າງ ແລະ ອາຫານເປັດໄຂ່ 02 ຕົວຢ່າງ), ສົ່ງຫ້ອງວິໄຈອາຫານສັດກົມລ້ຽງສັດ ແລະ ການປະມົງ, ວິໄຈໃນ 04 ທາດຫລັກ ຄື: ຄວາມຊຸ່ມ, ເຢື່ອໄຍ, ໄຂມັນ ແລະ ໂປຕີນ ຜົນການວິໄຈແມ່ນໄດ້ຕາມມາດຕະຖານທີ່ກຳນົດໄວ້.

5) ການແກ້ໄຂບັນຫາການລ້ຽງສັດ ແລະ ຜົນກະທົບຈາກໄພທຳມະຊາດ

ສົມທົບກັບຫ້ອງການຊັບພະຍາກອນນໍ້າ ແລະ ສິ່ງແວດລ້ອມເມືອງ ແລະ ພາກສ່ວນທີ່ກ່ຽວຂ້ອງລົງແກ້ໄຂຟາມລ້ຽງສັດທີ່ສົ່ງຜົນກະທົບຕໍ່ສິ່ງແວດລ້ອມ ແລະ ຊຸມຊົນໃກ້ຄຽງ ເປັນຕົ້ນຟາມລ້ຽງໝູຢູ່ເມືອງ ນາຊາຍທອງ, ໄຊທານີ ແລະ ປາກງື່ມ ຈຳນວນ 28 ຄັ້ງ ໂດຍລວມແລ້ວແນະນຳມາດຕະການປະຕິບັດການແກ້ໄຂ ແລະ ໃຫ້ບ້ານເປັນຜູ້ຕິດຕາມຢ່າງໃກ້ຊິດ ພ້ອມທັງໄດ້ລົງຕິດຕາມ ກວດກາເປັນແຕ່ລະໄລຍະ.

**2.1.2. ວຽກງານປະມົງ**

1) ການຄຸ້ມຄອງການລ້ຽງປາ ແລະ ສັດນໍ້າ

ໃນການຕອບສະໜອງຄວາມຕ້ອງການບໍລິໂພກຊີ້ນປາ ຂອງສັງຄົມຢູ່ນະຄອນຫລວງວຽງຈັນໄດ້ຊຸກຍູ້ຂະບວນການຜະລິດຂອງຊາວກະສິກອນລ້ຽງປາແບບຄອບຄົວ ແລະ ແບບເປັນຟາມໃຫ້ຂະຫຍາຍຕົວໄປຕາມແຜນພັດທະນາ ເສດຖະກິດ-ສັງຄົມ ທີ່ນະຄອນຫລວງວຽງຈັນວາງອອກ, ຮັບປະກັນໄດ້ດ້ານປະລິມານ ແລະ ຄຸນນະພາບ, ປະຈຸບັນນະຄອນຫລວງວຽງຈັນມີການລ້ຽງປາ ແລະ ສັດນໍ້າ ຄື: ປາລ້ຽງໃນໜອງ 2.157,30 ເຮັກຕາ ລ້ຽງປາ 107.865.100 ໂຕ, ໜອງປາທຳມະຊາດ 1.537 ເຮັກຕາ ປ່ອຍປາ 15.370.000 ໂຕ, ປານິນກະຊັງ 2.576 ກະຊັງ ລ້ຽງປາ 10.304.000 ໂຕ ແລະ ກົບ 8.439.000 ໂຕ, ສົມທຽບໃສ່ປີຜ່ານມາຈຳນວນການລ້ຽງປາໃນກະຊັງເພີ່ມຂຶ້ນ 279 ກະຊັງ ເທົ່າກັບ 12,14% ແລະ ຈຳນວນການລ້ຽງປາໃສ່ໜອງສະແມ່ນຢູ່ໃນລະດັບເດີມ.

ໄດ້ຈັດພິທີປ່ອຍປາ ໃນວັນປ່ອຍປາ ແລະ ອະນຸລັກສັດນໍ້າ-ສັດປ່າແຫ່ງຊາດ 13 ກໍລະກົດ ປະຈຳປີ 2020 ຂຶ້ນໃນ 9 ຕົວເມືອງ (ຂັ້ນນະຄອນຫຼວງວຽງຈັນຈັດພິທີທີ່ບຶງທາດຫຼວງ ເມືອງສີສັດຕະນາກ). ເປັນການເປີດຂະບວນການປ່ອຍປາ ໃນນະຄອນຫລວງວຽງຈັນຢ່າງເປັນທາງການ, ໃນວັນດັ່ງກ່າວ ໄດ້ປ່ອຍປາລົງສູ່ແຫຼ່ງນໍ້າທຳມະຊາດ ຈຳນວນ 2.112.500 ໂຕ ແລະ ສັດນໍ້າອື່ນອີກຈຳນວນໜຶ່ງ.

2) ການຜະລິດແນວພັນປາ

ແນວພັນປາ ເປັນປັດໃຈສຳຄັນເປັນຕົວຊີ້ວັດໃຫ້ແກ່ການສະໜອງຊີ້ນປາ ໂດຍສະເພາະແນວພັນປາທີ່ໄດ້ຮັບຄວາມນິຍົມບໍລິໂພກສູງແລະແນວພັນປາພື້ນເມືອງ, ໄດ້ຊຸກຍູ້ຟາມຜະລິດປານ້ອຍ 15 ແຫ່ງສາມາດຜະລິດປານ້ອຍໄດ້ 38 ລ້ານໂຕ (ສົມທຽບໃສ່ປີຜ່ານ ມາແມ່ນການຜະລິດເພີ່ມຂຶ້ນ 11,76%), ນອກນັ້ນຍັງສາມາດຜະລິດກົບນ້ອຍ ໄດ້ 2.031.000 ໂຕ.

3) ການຜະລິດອາຫານປາ

ອາຫານປາເປັນປັດໃຈສຳຄັນທີ່ສຸດໃນການລ້ຽງປາ ການຜະລິດອາຫານປາແມ່ນໃຊ້ຕົ້ນທຶນສູງໂດຍສະເພາະອຸປະກອນການຜະລິດ ແລະ ວັດຖຸດິບ, ນະຄອນຫລວງວຽງຈັນມີໂຮງງານຜະລິດອາຫານປາ 3 ແຫ່ງ ແຕ່ດຳເນີນການຜະລິດອາຫານປາ 1 ແຫ່ງ (ໂຮງງານຄວາມຫວັງໃໝ່) ຜະລິດອາຫານປາໄດ້ 25.866,66 ໂຕນທຽບໃສ່ປີຜ່ານມາເພີ່ມຂຶ້ນ 3.622,86 ໂຕນ ເທົ່າກັບ 16,28%, ແຕ່ຍັງບໍ່ທັນພຽງພໍກັບຄວາມຕ້ອງການ, ຍັງນຳ

ເຂົ້າຈາກຕ່າງປະເທດ 9.487,1 ໂຕນ ເທົ່າກັບ 26,83% ຂອງການຊົມໃຊ້ທັງໝົດ ຖ້າທຽບໃສ່ປີຜ່ານມາການນຳເຂົ້າຫຼຸດລົງ 27,15%.

4) ການຄຸ້ມຄອງຄຸນນະພາບອາຫານປາ

ໄດ້ສຸ່ມເກັບຕົວຢ່າງອາຫານປາຈາກໂຮງງານຜະລິດອາຫານສັດ ແລະ ທີ່ນຳເຂົ້າຈາກຕ່າງປະເທດ ຈຳນວນ 01 ຕົວຢ່າງ ສົ່ງຫ້ອງວິໄຈອາຫານສັດ ກົມລ້ຽງສັດ ແລະ ການປະມົງ ເພື່ອກວດກາຄຸຣຣະພາບ, ຜົນຂອງການວິໄຈແມ່ນໄດ້ຕາມເກນມາດຕະ ຖານ.

5) ການແກ້ໄຂບັນຫາການລ້ຽງສັດນ້ຳ ແລະ ຜົນກະທົບຈາກໄພທຳມະຊາດ

6) ການຄຸ້ມຄອງການປະມົງປະຈຳພື້ນທີ່ແຫຼ່ງນ້ຳ

ຕິດຕາມການຫາປາ, ຊື້-ຂາຍປາທຳມະຊາດຢູ່ ອ່າງນ້ຳຫຸມ ແລະ ອ່າງນ້ຳຊ່ວງ ຈຳນວນ 52.311 ກິໂລກຣາມ ທຽບໃສ່ປີຜ່ານມາເພີ່ມຂຶ້ນ 29.424 ກິໂລກຣາມ ເທົ່າກັບ 128,56%.

**2.1.3. ວຽກງານສັດຕະວະແພດ**

1) ການສັກຢາກັນພະຍາດສັດ ແລະ ການບໍລິການສັດຕະວະແພດ

ການສັກຢາກັນພະຍາດສັດເປັນວຽກທີ່ມີຄວາມສຳຄັນ ແລະ ຈຳເປັນ ໃນປະຈຸບັນເຊິ່ງເປັນສິ່ງຊີ້ວັດຂອງການຮັບປະກັນການຂະຫຍາຍຝູງສັດ ແລະ ສຸຂະພາບສັດ, ກ້າວໄປສູ່ການສະໜອງທາດຊີ້ນໃຫ້ໄດ້ຕາມແຜນທີ່ວາງໄວ້, ຂະແໜງໄດ້ລົງຊຸກຍູ້ຊີ້ນຳໜ່ວຍງານລ້ຽງສັດ ແລະ ການປະມົງ 09 ເມືອງສົມທົບກັບສັດຕະວະແພດບ້ານ ລົງເຄື່ອນໄຫວໃຫ້ບໍລິການສັກຢາກັນພະຍາດສັດ ໂດຍສະເພາະພະຍາດສັດທີ່ສຳຄັນ ແລະ ເກີດຂຶ້ນເລື້ອຍໆ ສາມາດປະຕິບັດໄດ້ ຄື: ງົວ 21.899 ໂຕ ເທົ່າກັບ 24,25% ທຽບໃສ່ຝູງສັດ, ຄວາຍ 3.643 ໂຕ ເທົ່າກັບ 24,03% ທຽບໃສ່ຝູງສັດ, ແບ້ 4.322 ໂຕ ເທົ່າກັບ 21,5% ທຽບໃສ່ຝູງສັດ, ໝູ 174.099 ໂຕ ເທົ່າກັບ 100% ທຽບໃສ່ຝູງສັດ, ສັດປີກ 2.003.401 ໂຕ ເທົ່າກັບ 83,12% ທຽບໃສ່ຝູງສັດ ແລະ ໝາ 13.613 ໂຕ ເທົ່າກັບ 19.98% ທຽບໃສ່ຝູງສັດ. ການສັກຢາກັນພະຍາດສັດໃນນະຄອນຫລວງວຽງຈັນ ປະຕິບັດໄດ້ 81,15% ຂອງຝູງສັດ.

ໄດ້ເອົາໃຈໃສ່ຕິດຕາມຊຸກຍູ້ການບໍລິການສັດຕະວະແພດຂອງໜ່ວຍງານລ້ຽງສັດ ແລະ ການປະມົງ 09 ເມືອງ, ໂຮງໝໍປົວສັດນະຄອນຫລວງວຽງຈັນ 02 ແຫ່ງ, ຫ້ອງປິ່ນປົວສັດເມືອງ ແລະ ຄລີນິກປົວສັດຂອງເອກະຊົນ 35 ແຫ່ງເປັນປະຈຳ, ໄລຍະຜ່ານມາຫົວໜ່ວຍບໍລິການໄດ້ໃຫ້ບໍລິການ ແລະ ປິ່ນປົວສັດລ້ຽງຂອງປະຊາຊົນ ຄື: ງົວ 4.534 ໂຕ, ຄວາຍ 251 ໂຕ, ແບ້ 989 ໂຕ, ໝູ 696 ໂຕ, ໝາ 18.854 ໂຕ ແລະ ແມວ 455 ໂຕ ໃນນັ້ນສັນລະສູດວໍ້ ໝາ 428 ໂຕ ແລະ ແມວ 05 ໂຕ.

2) ການເຝົ້າລະວັງພະຍາດສັດ

ໂດຍອີງຕາມທິດທາງຂອງກົມລ້ຽງສັດ ແລະ ການປະມົງກໍຄື ພະແນກະສິກຳ ແລະ ປ່າໄມ້ ປະຈຳນະຄອນຫຼວງວຽງຈັນ ຂະແໜງໄດ້ສົມທົບກັບໜ່ວຍງານລ້ຽງສັດ ແລະ ການປະມົງເມືອງໄດ້ຈັດຕັ້ງການເຝົ້າລະວັງພະຍາດສັດແບບປົກຕິ ແລະ ແບບເຄັ່ງຄັດແນ່ໃສ່ຈຳກັດການເກີດ ແລະ ລະບາດພະຍາດສັດໃນຝູງສັດລ້ຽງຂອງປະຊາຊົນ ແລະ ຟາມລ້ຽງສັດ ຄື: ລົງເກັບຕົວຢ່າງເລືອດໝູຂອງປະຊາຊົນ ບ້ານນາສ້ຽວ ເມືອງນາຊາຍທອງ ຈຳນວນ 40 ຕົວຢ່າງ ສົ່ງສູນວິໄຈພະຍາດສັດ ກົມລ້ຽງສັດ ແລະ ການປະມົງ ເພື່ອວິໄຈພະຍາດອະຫິວາໝູອາຟຣິກາ.

ເພື່ອເປັນການເຝົ້າລະວັງ ແລະ ຄວບຄຸມການລະບາດຂອງພະຍາດບໍ່ໃຫ້ ແຜ່ລາມອອກສູ່ວົງກ້ວາງ ທາງຂະແໜງລ້ຽງສັດ ແລະ ການປະມົງ ກໍ່ໄດ້ກະກຽມການຕອບໂຕ້ກັບພະຍາດ ໂດຍການກຳນົດເຂດລະບາດ ແລະ

ສ້າງເຂດກັນຊືນໃນເວລາພົບກໍລະນີສັດເຈັບ, ປິ່ນປົວສັດເຈັບ ແລະ ລົງໂຄສະນາເຜີຍແຜ່ຄວາມຮູ້ກ່ຽວກັບພະຍາດສັດ ແລະ ສະກັດກັ້ນພະຍາດສັດດັ່ງກ່າວຢ່າງເຄັ່ງຄັດ.

ນອກນັ້ນ ໄດ້ເຂົ້າຮ່ວມຂະບວນການ ຕ້ານພະຍາດ COVID-19 ໂດຍການຕິດຕາມ, ກວດກາການນໍາເຂົ້າຜະລິດຕະ ພັນສິນຄ້າກ່ຽວກັບສັດ ແລະ ສັດນໍ້າ. ສີດພົ່ນຢາຂ້າເຊື້ອພາຫະນະຂົນສົ່ງສັດ, ສິນຄ້າກ່ຽວກັບສັດຜ່ານຂົວມິດຕະພາບ ລາວ-ໄທ 1.

3) ການລະບາດ, ຄວບຄຸມ ແລະ ສະກັດກັ້ນພະຍາດສັດ

ຂະແໜງໄດ້ສົມທົບກັບໜ່ວຍງານລ້ຽງສັດ ແລະ ການປະມົງເມືອງ ແລະ ສັດຕະວະແພດບ້ານເອົາໃຈໃສ່ຊຸກຍູ້ການສັກຢາປ້ອງກັນພະຍາດສັດ ແລະ ເຝົ້າລະວັງພະຍາດສັດຕາມລະດູການຢ່າງໃກ້ຊິດ, ຍ້ອນການລ້ຽງສັດຂອງຊາວກະສິກອນຈໍານວນໜຶ່ງ ບໍ່ທັນໄດ້ເອົາໃຈໃສ່ດີເທົ່າທີ່ຄວນ ໃນການເບິ່ງແຍງສຸຂະພາບສັດຕາມຫຼັກການລ້ຽງສັດທີ່ປອດໄພທາງດ້ານຊີວະ ຈຶ່ງພາໃຫ້ມີການລະບາດພະຍາດສັດ ຄື: ພະຍາດເຕົ້າໂຮມເລືອດ ງົວເຈັບ 13 ໂຕ (ຕາຍ 10 ໂຕ) ແລະ ຄວາຍເຈັບ 13 ໂຕ (ຕາຍ 10ໂຕ); ພະຍາດໄຂ້ບວມ ງົວເຈັບ 01 ໂຕ (ຕາຍ 01 ໂຕ) ແລະ ຄວາຍເຈັບ 01 ໂຕ (ຕາຍ 01 ໂຕ);ພະຍາດປາກເປື່ອຍລົງເລັບ ງົວເຈັບ 537 ໂຕ (ຕາຍ 04 ໂຕ) ແລະ ແບ້ເຈັບ 30 ໂຕ; ພະຍາດຜິວໜັງອັກເສບ ງົວເຈັບ 2.484 ໂຕ (ຕາຍ 25 ໂຕ) ແລະ ໝູເຈັບ 03 ໂຕ; ພະຍາດອະຫິວາໝູອາຟຣິກາ ໝູເຈັບ 201 ໂຕ (ຕາຍ 170 ໂຕ) ໃນນັ້ນຂ້າທໍາລາຍ 31 ໂຕ; ພະຍາດອະຫິວາ ສັດປີກ ໄກ່ເຈັບ 26 ໂຕ (ຕາຍ 26 ໂຕ).

4) ວຽກງານການກວດກາສັດຕະວະແພດ

ລົງກວດກາ ຕິດຕາມການ ຊຸກຍູ້ການເຄື່ອນໄຫວຂອງສັດຕະວະແພດປະຈໍາໂຮງຂ້າສັດ, ກວດກາການນໍາເຂົ້າສັດຢູ່ດ່ານສັດຕະວະແພດສາກົນ, ດ່ານປະເພນີ ແລະ ດ່ານທ້ອງຖິ່ນ, ຫ້ອງກວດພະຍາດສັດ, ຕະຫຼາດ, ສາງເຢັນ, ຕາມສາຍທາງ ແລະ ອື່ນໆ ເປັນການກວດກາການຈັດຕັ້ງປະຕິບັດ ກົດໝາຍ ແລະ ນິຕິກໍາ ດ້ານການລ້ຽງສັດ, ສັດຕະວະແພດ ແລະ ການປະມົງ.

ນອກນັ້ນ ເຈົ້າໜ້າທີ່ສັດຕະວະແພດກວດກາເຄື່ອນທີ່ ໄດ້ລົງເຄື່ອນໄຫວກວດກາຢ່າງເປັນປະຈໍາ ແລະ ກວດກາສຸກເສີນ ຕາມສະພາບການເຄື່ອນຍ້າຍສັດ ທີ່ບໍ່ຖືກຕ້ອງຕາມລະບຽບຂອງຜູ້ປະກອບການຜ່ານມາໄດ້ກວດພົບການເຄື່ອນຍ້າຍບໍ່ຖືກຕ້ອງ ຈໍານວນ 08 ຄັ້ງ ມີຄື: ສັດປີກ 300 ໂຕ, ສິ້ນສ່ວນໝູ 3.850 ກິໂລກຣາມ ແລະ ອາຫານທະເລ ຈໍານວນ 2.655 ກິໂລກຣາມ ເພື່ອເປັນການປ້ອງກັນ ແລະ ສະກັດກັ້ນການລະບາດພະຍາດສັດ ພະນັກງານໄດ້ເຮັດບົດບັນທຶກກ່າວເຕືອນ, ແນະນໍາເຕັກນິກ ແລະ ລະບຽບການເຄື່ອນຍ້າຍສັດ ໃຫ້ຜູ້ເຄື່ອນຍ້າຍສັດດັ່ງກ່າວຫັນເຂົ້າສູ່ລະບຽບການເທື່ອລະກ້າວ.

5) ການກວດກາອະນາໄມຊີ້ນ

ວຽກງານຮັກສາສຸຂະນາໄມສັດ ແລະ ສິ້ນສ່ວນສັດ ທີ່ຈະນໍາມາບໍລິໂພກໃຫ້ມີຄວາມປອດໄພ ຂະແໜງໄດ້ປະກອບສັດຕະວະແພດເຂົ້າໃນການກວດກາສັດ ກ່ອນເຂົ້າຂ້າ ແລະ ຫລັງຂ້າ ຕາມເຕັກນິກວິຊາສະເພາະແລ້ວຢັ້ງຢືນກ່ອນນໍາໄປບໍລິໂພກ, ປະຈຸບັນນະຄອນຫຼວງວຽງຈັນ ມີໂຮງຂ້າສັດ ແລະ ຈຸດຂ້າສັດຍ່ອຍ ທັງໝົດ 19

ແຫ່ງ ທີ່ໃຫ້ບໍລິການຂ້າສັດ, ກວດກາສຸຂະນາໄດ້ສັດ ຄື: ງົວ 11.706 ໂຕ ເປັນຊີ້ນ 976 ໂຕນ, ຄວາຍ 3.436 ໂຕ ເປັນຊີ້ນ 321 ໂຕນ, ໝູຊີ້ນ 169.227 ໂຕ ເປັນຊີ້ນ 11.019 ໂຕນ ແລະ ແບ້ 632 ໂຕ ເປັນຊີ້ນ 10.43 ໂຕນ. ຜ່ານການກວດກາສັດກ່ອນເຂົ້າຂ້າ ແລະ ຫລັງຂ້າຕາມເຕັກນິກວິຊາສະເພາະແລ້ວ ແມ່ນບໍ່ພົບກໍລະນີຜິດປົກກະຕິໃນສັດ ແລະ ສິ້ນສ່ວນສັດສາມາດນໍາໄປບໍລິໂພກໄດ້.

6) ວິໄຈຢາຕ້ານເຊື້ອຕົກຄ້າງ ແລະ ສານເຄມີປົນເປື້ອນ

ເພື່ອຮັບປະກັນຄວາມປອດໄພທາງດ້ານສະບຽງອາຫານທໍ່ສັງຄົມ ຂະແໜງໄດ້ລົງເຄື່ອນໄຫວເກັບຕົວຢ່າງເລືອດສັດຢູ່ຟາມ ແລະ ສິ້ນສ່ວນຜະລິດຕະພັນສັດຢູ່ໂຮງງານຂ້າສັດ ກ່ອນຈະມີການເຄື່ອນຍ້າຍໄປຈຳໜ່າຍ ກວດກາຫາຢາຕ້ານເຊື້ອຕົກຄ້າງ ຄື: ເລືອດໝູໄດ້ 2.190 ຕົວຢ່າງ (ໃນນັ້ນ ຈາກຕ່າງແຂວງ 570 ຕົວຢ່າງ) ແລະ ປາ ໄດ້ 69 ຕົວຢ່າງ, ຜົນການວິໄຈພົບຢາຕ້ານເຊື້ອຕົກຄ້າງ ສູງກ່ວາ 0,5 mg/kg ຈຳນວນ 110 ຕົວຢ່າງ ໄດ້ເຮັດໜັງສືແຈ້ງຜົນການວິໄຈ ແລະ ລົງສົມທົບກັບເຈົ້າຂອງຟາມ ເພື່ອປຶກສາຫາຫລືວຽກຫລຸດ ຜ່ອນການນຳໃຊ້ຢາຕ້ານເຊື້ອທຸກຊະນິດ.

ສຸ່ມກວດກາຫາສານເຄມີປົນເປື້ອນ (ສານຟໍມາລີນ ແລະ ສານຟອກຂາວ) ໃນຜະລິດຕະສັດ ແລະ ອາຫານທະເລ ທີ່ນຳເຂົ້າມາຈາກປະເທດໄທ, ຢູ່ດ່ານກວດກາສັດຕະວະແພດສາກົນ ຂົວມິດຕະພາບ 1, ສຸ່ມເກັບຕົວຢ່າງ ກຸ້ງ ແລະ ປາມຶກ ຈຳນວນ 329 ຕົວຢ່າງ ແລະ ສຸ່ມເກັບຕົວຢ່າງກວດການຫາຢາຕ້ານເຊື້ອຕົກຄ້າງໃນຜະລິດຕະພັນສັດ ຈຳນວນ 660 ຕົວຢ່າງ ແລະ ສຸມກວດສາເຄມີພິດຕົກຄ້າງໃນອາຫານສັດ, ສ່ວນປະສົມອາຫານສັດ ຈຳນວນ 496 ຕົວຢ່າງ, ຜົນການກວດກາແມ່ນບໍ່ພົບສານເຄມີປົນເປື້ອນ ແລະ ຢາຕ້ານເຊື້ອຕົກຄ້າງໃນຜະລິດຕະພັນດັ່ງກ່າວ.

ລົງກວດກາສານປົນເປື້ອນໃນຜະລິດຕະພັນສັດ ຢູ່ໃນຕະຫລາດ, ຮ້ານອາຫານ ແລະ ສາງເຢັນ ໄດ້ 39 ຄັ້ງ ຈຳນວນ 302 ຕົວຢ່າງ, ຜົນກວດພົບສານຟໍມາລີນປົນເປື້ອນໃນຜະລິດຕະພັນປາມຶກແຊ່ ແລະ ຢໍຂາວ ຈຳນວນ 03 ຕົວຢ່າງ ໄດ້ຢຶດຜະລິດຕະພັນ ຈຳນວນ 16 ກິໂລ ແລະ ທຳລາຍຜະລິດຕະພັນດັ່ງກ່າວຕາມເຕັກ ນິກ, ໄດ້ເຮັດບົດບັນທຶກກ່າວເຕືອນ, ສຶກສາອົບຮົມ ແລະ ແນະນຳລະບຽບການໃຫ້ຜູ້ປະກອບດັ່ງກາວ.

7) ການກວດກາການສົ່ງອອກ, ນຳເຂົ້າ ແລະ ສົ່ງຜ່ານ

ດ່ານກວດກາສັດຕະວະແພດສາກົນ ແລະ ດ່ານປະເພນີໄດ້ເອົາໃຈໃສ່ຕິດຕາມກວດກາການນຳເຂົ້າສັດ, ແນວພັນສັດ, ອາຫານສັດ, ຢາສັດ ແລະ ຜະລິດຕະພັນສັດທີ່ນຳເຂົ້າມາຮັບໃຊ້ການລ້ຽງສັດ ແລະ ການບໍລິໂພກຢູ່ນະຄອນຫລວງວຽງຈັນ ເປັນຕົ້ນແມ່ນການກວດກາເອກະສານ, ກວດກາສັດ ແລະ ຜະລິດຕະພັນສັດຕົວຈິງໃຫ້ຖືກຕ້ອງຕາມລະບຽບການ ແລະ ເຕັກນິກ ເພື່ອຮັບປະກັນຄວາມປອດໄພ, ຄຸນນະພາບ ແລະ ຄວາມສ່ຽງຂອງພະຍາດ. ສາມາດກວດກາການນຳເຂົ້າ ແລະ ສົ່ງອອກສັດ, ແນວພັນສັດ, ອາຫານສັດ, ຢາສັດ ແລະ ຜະລິດຕະພັນສັດ ຄື: 1). ຂາເຂົ້າແນວພັນສັດ 2.276.179 ໂຕ, ແນວພັນປາ 7.210.600 ໂຕ, ເຜິ້ງ 600.000 ໂຕ, ອາຫານສັດ ແລະ ສ່ວນປະສົມອາຫານສັດ 45.980,44 ໂຕນ, ຜະລິດຕະພັນສັດ-ປາ ແລະ ອາຫານທະເລ 1.621 ໂຕນ.

**2.1.4. ການສະໜອງທາດຊີ້ນ**

ການບໍລິໂພກທາດຊີ້ນຢູ່ນະຄອນຫລວງວຽງຈັນ ທັງໝົດ 69.304,51 ໂຕນ, ການລ້ຽງສັດຂອງຊາວກະສິກອນໃນນະຄອນຫລວງວຽງຈັນ ສາມາດຕອບສະໜອງຜົນຜະລິດໃຫ້ຜູ້ບໍລິໂພກ ໄດ້ 61.816,38 ໂຕນ ສະເລ່ຍຕໍ່ຫົວຄົນ 64,48 ກິໂລ/ຄົນ/ປີ ມີຄື: ຊີ້ນງົວ 1.349,68 ໂຕນ; ຊີ້ນຄວາຍ 203,99 ໂຕນ; ຊີ້ນແບ້ 71,01 ໂຕນ; ຊີ້ນໝູ 15.802,24 ໂຕນ; ຊີ້ນສັດປີກ 3.512,57 ໂຕນ; ຊີ້ນປາ ແລະ ສັດນ້ຳ 27.589,36 ໂຕນ; ໄຂ່ 13.209,41 ໂຕນ ແລະ ນົມ 78,11 ໂຕນ. ໄດ້ສົ່ງອອກ ຄື: ຄວາຍ 23 ໂຕ ເທົ່າກັບ 2.15 ໂຕນ, ງົວ 563 ໂຕ ເທົ່າກັບ 45,56 ໂຕນ, ໝູຊີ້ນ 3.503 ໂຕ ເທົ່າກັບ 227,7 ໂຕນ; ໄກ່ຊີ້ນ 31,23 ໂຕນ, ໄຂ່ 1.476,83 ໂຕນ, ປານິນລ້ຽງໃນກະຊັງ 540 ໂຕນ ແລະ ອື່ນໆ 127,17 ໂຕນ ໄປຕ່າງແຂວງ. ຄ່ຽງຄູ່ກັນນັ້ນສັດບາງປະເພດ ກໍ່ມີການນຳເຂົ້າສັດເປັນມາແຕ່ຕ່າງແຂວງ ເປັນຊີ້ນ 4.275,23 ໂຕນ ມີຄື: ງົວ 8.070 ໂຕ (ເປັນຊີ້ນ 653 ໂຕນ); ຄວາຍ 1.929

ໂຕ (ເປັນຊີ້ນ 180,36 ໂຕນ); ໝູຊີ້ນ 44.537 ໂຕ (ເປັນຊີ້ນ 2.894,91 ໂຕນ); ແບ້ 11.027 ໂຕ (ເປັນຊີ້ນ 181,94 ໂຕນ) ແລະ ປາ 365 ໂຕນ. ນຳເຂົ້າມາຈາກຕ່າງປະເທດ ມີຄື: ຊີ້ນງົວ 33,25 ໂຕນ, ຊີ້ນຄວາຍ 105,26 ໂຕນ; ສິ່ນສ່ວນແກະ 6,64 ໂຕນ; ສິ່ນສ່ວນໝູ 8,9 ສິ່ນສັດປີກ 904,66 ໂຕນ ແລະ ປາຊີ້ນ ແລະ ອາຫານທະເລ 562,32 ໂຕນ (ລາຍລະອຽດຢູ່ເອກະສານຊ້ອນທ້າຍ).

ສັງລວມແລ້ວ ສາມາດສະໜອງຜົນຜະລິດຊີ້ນໄດ້ຈຳນວນ 61.816,38 ໂຕນເທົ່າກັບ 92,04% ຂອງການບໍລິໂພກໃນປີ, ໄດ້ນຳເຂົ້າທາດຊີ້ນຈາກຕ່າງແຂວງ ແລະ ຕ່າງປະເທດຈຳນວນ 5.896,26 ໂຕນເທົ່າກັບ 7,96% ຂອງການບໍລິໂພກໃນນະຄອນຫລວງວຽງຈັນ.

### 2.2. ການຜະລິດເປັນສິນຄ້າ

#### 2.2.1. ການລ້ຽງສັດໃຫຍ່ເປັນສິນຄ້າ

ປະຈຸບັນການລ້ຽງສັດຄ້ຽວເອື້ອງໃນນະຄອນຫລວງວຽງຈັນ ມີທັງໝົດ 145.305 ໂຕ (ງົວ 96.624 ໂຕ, ຄວາຍ 15.449 ໂຕ ແລະ ແບ້ 33.232 ໂຕ) ໃນນັ້ນການລ້ຽງແບບເປັນຟາມ ມີຄື: ງົວ 120 ຟາມ ມີງົວ 9.271 ໂຕ ແລະ ຟາມລ້ຽງແບ້ 11 ຟາມ ມີແບ້ 1.693 ຟາມ. ໃນປີສາມາດຈຳໜ່າຍງົວ, ຄວາຍ ແລະ ແບ້ ໄດ້ 23.164 ໂຕ ມູນຄ່າລວມ 123,9 ຕື້ກີບ.

#### 2.2.2. ການລ້ຽງງໝູເປັນສິນຄ້າ

ການລ້ຽງໝູເປັນສິນຄ້າ ມີການຂະຫຍາຍຕົວ ແລະ ພັດທະນາໄປສູ່ການລ້ຽງດ້ວຍລະບົບທີ່ທັນສະໄໝ ຕອບສະໜອງຄວາມຕ້ອງການບໍລິໂພກຊີ້ນໄດ້ຢ່າງພຽງພໍ ນະຄອນຫວງວຽງຈັນມີຟາມລ້ຽງໝູທັງໝົດ 155 ຟາມມີໝູລ້ຽງທັງໝົດ 126.048 ໂຕ, ໃນປີສາມາດຈຳໜ່າຍໝູ ໄດ້ 243.112 ໂຕ ມູນຄ່າ 705 ຕື້ກີບ.

#### 2.2.3. ການລ້ຽງສັດປີກເປັນສິນຄ້າ

ການລ້ຽງສັດປີກ ແມ່ນມີການລ້ຽງຢ່າງກ້ວາງຂວາງເປັນຂະບວນ ສາມາດຕອບສະໜອງທາດຊີ້ນໄດ້ຢ່າງພຽງພໍເປັນຕົ້ນແມ່ນຊີ້ນ ແລະ ໄຂ່ ໂດຍສະເພາະໄຂ່ໄກ່ໄດ້ສົ່ງອອກໄປຈຳໜ່າຍຕ່າງແຂວງ, ທົ່ວນະຄອນຫລວງວຽງຈັນມີຟາມລ້ຽງສັດປີກ 293 ຟາມ, ໃນນັ້ນຟາມລ້ຽງໄກ່ພັນໄຂ່ 194 ຟາມ ມີໄກ່ພັນໄຂ່ 912.479 ໂຕ, ຟາມລ້ຽງໄກ່ຊີ້ນ 47 ຟາມ ມີໄກ່ຊີ້ນ 340.835 ໂຕ, ຟາມລ້ຽງເປັດໄຂ່ 42 ຟາມ ມີເປັດພັນໄຂ່ 92.800 ໂຕ, ຟາມລ້ຽງເປັດຊີ້ນ 08 ຟາມ ມີເປັດພັນຊີ້ນ 21.630 ໂຕ ແລະ ຟາມລ້ຽງນົກກະທາ 2 ຟາມ ມີນົກກະທາ 234.500ໂຕ, ໃນປີມີຜົນຜະລິດຊີ້ນສັດປີກ ໄດ້ 3.512 ໂຕນ ມູນຄ່າລວມ 101,8 ຕື້ກີບ ແລະ ຜົນຜະລິດໄຂ່ ໄດ້ 13.209 ໂຕນ ມູນຄ່າ 231,9 ຕື້ກີບ.

#### 2.2.4. ການລ້ຽງສັດນໍ້າເປັນສິນຄ້າ

ຂະແໜງໄດ້ສົມທົບກັບເມືອງລົງຕິດຕາມ ຊຸກຍູ້ການລ້ຽງສັດນໍ້າຂອງຊາວກະສິກອນ, ເພື່ອໃຫ້ຮັບປະກັນການຜະລິດສັດນໍ້າ ໃນກະຊັງ ແລະ ການລ້ຽງໃນໜອງ ໃຫ້ມີການຂະຫຍາຍຕົວ ປະຈຸບັນ ມີ: ກະຊັງລ້ຽງປານິນ 2.576 ກະຊັງ ສະໜອງຜົນຜະລິດໃນປີ 12.041 ໂຕນ ແລະ ປາລ້ຽງໃນໜອງ ແລະ ປາໜອງທຳມະຊາດ 3.694,3 ເຮັກຕາ ສະໜອງຜົນຜະລິດໃນປີ 15.465 ໂຕນ, ຜົນຜະລິດປາຊີ້ນທັງໝົດ 27.506 ໂຕນ ມູນຄ່າລວມ 447,6 ຕື້ກີບ ແລະ ສະໜອງກົບຊີ້ນໄດ້ 83 ໂຕນ ມູນຄ່າ 2,07 ຕື້ກີບ. ນອກນັ້ນຍັງໄດ້ຕິດຕາມການຫາປາທຳມະຊາດຈາກອ່າງນໍ້າງຸມ ໄດ້ 22.337 ກິໂລ ແລະ ອ່າງນໍ້າຊວງ ໄດ້ 29.974 ກິໂລ ມູນຄ່າລວມ 889 ລ້ານກວ່າກີບ.

#### 2.2.5. ການຂຶ້ນທະບຽນຟາມ

ຈັດຕັ້ງການຂຶ້ນທະບຽນຟາມ ແລະ ຕໍ່ທະບຽນຟາມລ້ຽງສັດໃນນະຄອນຫລວງວຽງຈັນ ເປັນການດຸ່ນດ່ຽງ ແລະ ຄຸ້ມຄອງການລ້ຽງສັດໄປຕາມແຜນທີ່ວາງໄວ້ ໃຫ້ໄດ້ທັງປະລິມານ ແລະ ຄຸນນະພາບ ປີນີ້ໄດ້ຂຶ້ນທະບຽນຟາມໃໝ່ ແລະ ຕໍ່ທະບຽນຟາມ ມີຄື: ຟາມລ້ຽງມ້າ 01 ຟາມ ລ້ຽງມ້າ 20 ໂຕ, ຟາມລ້ຽງງົວ 35 ຟາມ ລ້ຽງງົວ

5.989 ໂຕ, ຟາມລ້ຽງແບ້ 04 ຟາມ ລ້ຽງແບ້ 850 ໂຕ, ຟາມລ້ຽງໝູ 135 ຟາມລ້ຽງໝູ 156.555 ໂຕ, ຟາມລ້ຽງໄກ່ໄຂ່ 124 ຟາມ ລ້ຽງໄກ່ໄຂ່ 800.812 ໂຕ, ຟາມລ້ຽງໄກ່ຊີ້ນ 43 ຟາມລ້ຽງໄກ່ຊີ້ນ 287.900 ໂຕ, ຟາມລ້ຽງເປັດພັນໄຂ່ 29 ຟາມ ລ້ຽງເປັດ 92.420 ໂຕ, ຟາມລ້ຽງເປັດພັນຊີ້ນ 02 ຟາມ 19.000 ໂຕ, ຟາມລ້ຽງນົກກະທາ 01 ຟາມ ລ້ຽງນົກກະທາ 100.000 ໂຕ, ຟາມລ້ຽງເຜິ້ງ 01 ຟາມ ລ້ຽງເຜິ້ງ 900.000 ໂຕ, ຟາມລ້ຽງປານິນກະຊັງ 37 ຟາມ ມີກະຊັງ 3.067 ກະຊັງ ແລະ ຟາມລ້ຽງປາ ໜອງ 19 ຟາມ ເນື້ອທີ່ 109.73 ເຮັກຕາ, ຍັງໄດ້ມີການສືບຕໍ່ຂຶ້ນທະບຽນຟາມ ແລະ ມາດຕະຖານຟາມລ້ຽງສັດ.

**2.3. ການຊຸກຍູ້ການຜະລິດລະດູແລ້ງ, ວຽກງານຈຸດສຸມທີ່ພຽງວຽງຈັນ ແລະ ວຽກງານສາມສ້າງ**

**2.4. ສະມາຄົມລ້ຽງງົວນະຄອນຫຼວງວຽງຈັນ**

ສະມາຄົມລ້ຽງງົວນະຄອນຫຼວງວຽງຈັນ ມີ 16 ຟາມ ມີງົວ 1.922 ໂຕ ມີເນື້ອທີ່ປູກຫຍ້າ 294,6 ເຮັກຕາ;

ສົມທົບກັບຫ້ອງການກະສິກຳ ແລະ ປ່າໄມ້ ປະຈຳເມືອງ ໄຊເສດຖາ, ນາຊາຍທອງ, ໄຊທານີ ແລະ ຫາດຊາຍຟອງ ລົງຈັດຕັ້ງການປະສົມພັນທຽມງົວໄດ້ ທັງໝົດ ຈຳນວນ 282 ໂຕ ເທົ່າກັບ 28,2% ຂອງແຜນການປີ (ສັງລວມທັງໝົດປະສົມພັນທຽມໄດ້ 1.113 ໂຕ, ປະສົມພັນຕິດ 810 ໂຕ, ເກີດແລ້ວ 514 ໂຕ)

**2.5. ການພັດທະນາພື້ນຖານໂຄງລ່າງ ແລະ ພື້ນຖານວັດຖຸເຕັກນິກ**

**2.6. ການຮ່ວມມື ແລະ ລົງທຶນ**

ປີ 2021 ນີ້ພາກເອກະຊົນ ໄດ້ມີການລົງທຶນໃສ່ຂົງເຂດວຽກງານລ້ຽງສັດ ແລະ ການປະມົງ ຢ່າງກວ້າງຂວາງ ແລະ ຮອບດ້ານ ໂດຍສະເພາະແມ່ນບັນດາຟາມລ້ຽງສັດ, ຟາມລ້ຽງສັດນ້ຳ, ອາຫານສັດ, ແນວພັນສັດ, ຢາຮັກສາສຸຂະພາບສັດ ເຊິ່ງມີບໍລິສັດ ແລະ ຜູ້ປະກອບການຫລາຍກ່ວາ 90 ບໍລິສັດລົງທຶນໃສ່ວຽກງານລ້ຽງສັດ, ການປະມົງ ແລະ ການສັດຕະວະແພດ ມູນຄ່າລວມທັງໝົດ 580 ຕື້ກວ່າກີບ. ໄດ້ການຊ່ວຍເຫຼືອອຸ ປະກອນຈາກໂຄງການລ້ຽງສັດ ແລະ ປາເປັນສິນຄ້າ ຮ່ວມື ລາວ-ຮົງກາລີ. ນອກນັ້ນຍັງໄດ້ຮັບທຶນຊ່ວຍເຫລືອຈາກຕ່າງປະເທດເປັນຕົ້ນການຮ່ວມືການເຝົ້າລະວັງພະຍາດສັດ ສອງແຂວງຄູ່ຂະໜານວຽງຈັນ-ໜອງຄາຍ, ການເຝົ້າລະ ວັງພະຍາດຂາມຊາຍແດນ ແລະ ອື່ນໆ.

**2.7. ການເຜີຍແຜ່ ແລະ ຜັນຂະຫຍາຍກົດໝາຍ**

ສົມທົບກັບຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ລົງເຜີຍແຜ່ກົດໝາຍວ່າດ້ວຍການລ້ຽງສັດ ແລະການສັດຕະວະແພດ, ກົດໝາຍວ່າດ້ວຍການປະມົງ, ຂໍ້ຕົກລົງ, ແຈ້ງການ ໃຫ້ຜູ້ປະກອບການ, ເຈົ້າຂອງຟາມລ້ຽງສັດ, ຫົວໜ້າກຸ່ມບ້ານ, ນາຍບ້ານ, ສັດຕະວະແພດບ້ານ ພ້ອມປະຊາຊົນເພື່ອຮັບຮູ້ເຂົ້າໃຈເນື້ອໃນຈິດໃຈຂອງກົດໝາຍດັ່ງກ່າວທົ່ວນະຄອນຫຼວງວຽງຈັນ, ຈຳນວນ 06 ຄັ້ງຜູ້ເຂົ້າຮ່ວມ ທັງໝົດ 176 ທ່ານ ເປັນຍິງ 86 ທ່ານ.

**2.8. ການພັດທະນາບຸກຄະລາກອນ**

ຈັດຕັ້ງຜັນຂະຫຍາຍກົດໝາຍເຂົ້າສູ່ໜ້າທີ່ວຽກງານເປັນຕົ້ນແມ່ນດຳລັດ, ແຈ້ງການ, ລະບຽບການແລະຂໍ້ກຳນົດຕ່າງໆ ເຂົ້າສູ່ໜ້າທີ່ວຽກງານວິຊາສະເພາະໂດຍສະເພາະກົດໝາຍວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດ (ສະບັບປັບປຸງ) ສະບັບເລກທີ 08/ສພຊ ລົງວັນທີ 11 ພະຈິກ 2016, ກົດໝາຍວ່າດ້ວຍການປະມົງສະບັບເລກທີ 03/ສພຊ ລົງວັນທີ 09 ກໍລະກົດ 2009 ແລະ ອື່ນໆ. ເອົາໃຈໃສ່ເພີ່ມທະວີໃນການບຳລຸງຍົກລະດັບ ແລະ ກໍ່ສ້າງພະນັກງານໃນຂະແໜງການ, ເພື່ອຍົກສູງຄວາມຮູ້, ຄວາມສາມາດຂອງພະນັກງານໃຫ້ສູງຂຶ້ນເທື່ອລະກ້າວ ເຊິ່ງປີຜ່ານມາ ໄດ້ສົ່ງພະນັກງານເຂົ້າຮ່ວມຝຶກອົບຮົມ, ຮໍ່າຮຽນໃນໄລຍະສັ້ນ ແລະ ຍາວ ດັ່ງນີ້: ເຂົ້າຮ່ວມຝຶກອົບຮົມຍົກລະດັບວິຊາສະເພາະໄລຍະສັ້ນວຽກລ້ຽງສັດ, ການປະມົງ ແລະ ສັດຕະວະແພດເປັນຕົ້ນແມ່ນການຝຶກອົບຮົມການຄຸ້ມ

ຄອງການລ້ຽງສັດ, ການຄຸ້ມຄອງການປະມົງ, ດ່ານສັດຕະວະແພດ ຢູ່ພາຍໃນ 16 ຄັ້ງ (ຜ່ານລະບົບທາງໄກ 11 ຄັ້ງ) ມີພະນັກງານເຂົ້າຮ່ວມທັງໝົດ 57 ເທື່ອຄົນ ເປັນຍິງ 24 ເທື່ອຄົນ, ມີພະນັກງານ 03 ທ່ານ ກຳລັງຍົກລະດັບວິຊາສະເພາະປະລິນຍາໂທ.

**2.9. ການບໍລິຫານເອກະສານ ຂາເຂົ້າ-ຂາອອກ**

ວຽກງານການບໍລິການ ຂາເຂົ້າ-ຂາອອກ ຂອງຂະແໜງໃນປີ ໄດ້ຮັບເອກະສານຂາເຂົ້າທັງໝົດ 1.905 ສະບັບ ແລະ ເອກະສານຂາອອກທັງໝົດ 2.181 ສະບັບ. ໄດ້ສະເໜີຂໍອະນຸຍາດນຳເຂົ້າ ສັດ, ແນວພັນສັດ, ຜະລິດຕະພັນສັດ, ອາຫານສັດ ແລະ ວັກຊີນ ຄື: ໝູພໍ່-ແມ່ພັນ 2.160 ໂຕ, ໝູນ້ອຍ 2.000 ໂຕ, ໄກ່ແມ່ສາວພັນໄຂ່ 275.750 ໂຕ, ໄກ່ນ້ອຍພັນໄຂ່ 574.000 ໂຕ, ໄກ່ນ້ອຍພັນໄຂ່ໂຕຜູ້ 70.400 ໂຕ, ໄກ່ນ້ອຍສາມສາຍເລືອດ 80.000 ໂຕ, ໄຂ່ໄກ່ (ພໍ່ແມ່ພັນ) 30.240 ໜ່ວຍ, ເປັດແມ່ສາວພັນໄຂ່ 48.000 ໂຕ, ເປັດນ້ອຍພັນໄຂ່ 20.000 ໂຕ, ເຜີ້ງ 600.000 ໂຕ ປານ້ອຍ 17.200.000 ໂຕ, ກຸ້ງນ້ອຍ 350.000 ໂຕ, ອາຫານທະເລ 3.821 ໂຕນ, ອາຫານສັດ 34.729 ໂຕນ, ສ່ວນປະສົມອາຫານ 19.238 ໂຕນ, ຜະລິດຕະພັນສັດ 1.497 ໂຕນ ແລະ ໄດ້ອອກອະນຸຍາດເຄື່ອນຍ້າຍ ຄື: ງົວ 563 ໂຕ, ຄວາຍ 23 ໂຕ, ແບ້ 11 ໂຕ, ໝູພໍ່ພັນ 05 ໂຕ, ໝູແມ່ພັນ 1.336 ໂຕ, ໝູນ້ອຍ 85.742 ໂຕ, ໝູຊີ້ນ 3.503 ໂຕ, ໄກ່ແມ່ສາວພັນໄຂ່ 125.710 ໂຕ, ໄກ່ນ້ອຍພັນໄຂ່ 44.700 ໂຕ, ໄກ່ນ້ອຍລາດ 740.700 ໂຕ, ໄກ່ນ້ອຍສາມສາຍເລືອດ 411.700 ໂຕ, ໄກ່ຊີ້ນ 32.530 ໂຕ, ເປັດແມ່ສາວພັນໄຂ່ 5.700 ໂຕ, ຜະລິດຕະພັນສັດ 127 ໂຕນ ແລະ ໄຂ່ 26.583.000 ໜ່ວຍ.

**3. ຈຸດດີ, ຈຸດອ່ອນ ແລະ ບົດຮຽນທີ່ຖອດຖອນໄດ້**

**3.1. ຈຸດດີ**

- ຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ VII ຂອງອົງຄະນະພັກນະຄອນຫລວງວຽງຈັນ ກໍ່ຄືແຜນພັດທະນາເສດຖະກິດ-ສັງຄົມຂອງນະຄອນຫລວງວຽງຈັນວາງອອກໃຫ້ປະກົດຜົນເປັນຈິງ.
- ມີທິດທາງແຜນການປະຈຳປີ 2021 ແລະ ແຜນການປະຈຳງວດຢ່າງລະອຽດແຕ່ລະໄລຍະ, ພະນັກງານແຕ່ລະຄົນສາມາດຈັດຕັ້ງປະຕິບັດໄດ້ຢ່າງມີປະສິດທິຜົນ;
- ໄດ້ຮັບການຊີ້ນຳໆພາຢ່າງໃກ້ຊິດ ຈາກການນຳຂັ້ນເທິງເປັນບ່ອນອີງໃນການຈັດຕັ້ງປະຕິບັດວຽກ;
- ໄດ້ຈັດແບ່ງຕຳແໜ່ງໜ້າທີ່ພະນັກງານວິຊາການ ພາຍໃນຂະແໜງລ້ຽງສັດ ແລະ ການປະມົງໃຫ້ແທດເໝາະກັບໜ້າວຽກຕົວຈິງ ຮັບປະກັນຮູບການຈັດຕັ້ງກະທັດຮັດເຮັດວຽກມີປະສິດທິຜົນ ແລະ ປະຢັດ;
- ພະນັກງານທຸກຄົນຢູ່ແຕ່ລະຂັ້ນ ໄດ້ເອົາໃຈໃສ່ວຽກງານຢ່າງຕັ້ງໜ້າ ແລະ ບໍ່ມີປະກົດການຫຍໍ້ທໍ້ໃນວຽກງານເກີດຂຶ້ນ;
- ຊາວກະສິກອນ (ຜູ້ເຮັດການຜະລິດຕົວຈິງ) ຍັງເອົາໃຈໃສ່ປະຕິບັດວຽກງານຂອງຕົນເອງ ແລະ ໃຫ້ການຮ່ວມມືກັບພາກສ່ວນທີ່ກ່ຽວຂ້ອງ ໂດຍສະເພາະຂໍ້ມູນຂ່າວສານ ແລະ ການຮ່ວມມືດ້ານວິຊາການຢ່າງເປັນປົກກະຕິ;
- ມີການສົມທົບກັບພາກສ່ວນກ່ຽວຂ້ອງເປັນຢ່າງດີ ແລະ ເພື່ອຮັບປະກັນການສະໜອງອາຫານໃຫ້ນະຄອນຫລວງວຽງຈັນຢ່າງພຽງພໍ ແລະ ປອດໄພ;
- ໄດ້ຮັບການຮ່ວມມື, ຊ່ວຍເຫລືອຈາກພາກສ່ວນຕ່າງໆ ໃນການຈັດຕັ້ງປະຕິບັດວຽກເຮັດໃຫ້ສຳເລັດຕາມເປົ້າໝາຍເປັນຕົ້ນແມ່ນ: ກົມລ້ຽງສັດ ແລະ ການປະມົງ, ພະແນກອຸດສະຫະກຳ ແລະ ການຄ້ານະຄອນ ຫລວງວຽງຈັນ, ພະແນກສາທາລະນະສຸກນະຄອນຫລວງວຽງຈັນ, ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ, ອົງການຈັດຕັ້ງສາກົນ ທີ່ໃຫ້ການຊ່ວຍເຫລືອຕະຫລອດຮອດນັກທຸລະກິດ ແລະ ຜູ້ປະກອບການລ້ຽງສັດ.

### 3.2. ຈຸດອ່ອນ

- ແຜນງານຜະລິດສະບຽງອາຫານ ແລະ ການຜະລິດເປັນສິນຄ້າ ຍັງມີບາງໜ້າວຽກບໍ່ທັນໄດ້ຜັນຂະຫຍາຍໃຫ້ເປັນອັນລະອຽດໃນການຈັດຕັ້ງປະຕິບັດ.
- ງົບປະມານທີ່ໃຊ້ໃນການສົ່ງເສີມ ດ້ານວິຊາການຍັງຈຳກັດ ບໍ່ທັນພຽງພໍກັບຄວາມຮຽກຮ້ອງຕ້ອງການເຮັດໃຫ້ການຈັດຕັ້ງປະຕິບັດວຽກງານຊັກຊ້າ.
- ການລົງຊຸກຍູ້ການຜະລິດ ເພື່ອນຳເອົາເຕັກໂນໂລຊີໃໝ່ລົງສູ່ຊາວກະສິກອນ ຂອງວິຊາການຍັງບໍ່ທັນເຮັດໄດ້ຢ່າງເປັນປົກກະຕິ ຕໍ່ເນື່ອງ.
- ການຈັດຕັ້ງປະຕິບັດທິດທາງແຜນການບາງໜ້າວຽກ ຍັງບໍ່ໄປຕາມແຜນການທີ່ວາງໄວ້ ການເຮັດວຽກຍັງເຮັດໄປຕາມສະພາບທີ່ເກີດຂຶ້ນ.
- ສະພາບພາບໄພທຳມະຊາດ, ນ້ຳຖ້ວມ, ແຫ້ງແລ້ງ, ການລະບາດພະຍາດສັດ ແລະ ການລະບາດຂອງພະຍາດໂຄວິດ-19 ເຮັດໃຫ້ການຜະລິດບໍ່ຂະຫຍາຍຕົວເທົ່າທີ່ຄວນ.
- ພະນັກງານບາງຄົນຍັງຊັກຊ້າລໍຖ້າແຕ່ຄຳສັ່ງ, ສະຕິເປັນເຈົ້າຕົນເອງ ແລະ ຫົວຄິດປະດິດສ້າງຍັງຈຳກັດ ຈຶ່ງເຮັດໃຫ້ວຽກງານຊັກຊ້າບໍ່ທັນກັບສະພາບການ ເປັນຕົ້ນແມ່ນປ້ອນຂໍ້ມູນຂ່າວສານການລາຍງານວຽກຍັງຊ້າ, ເກັບກຳຂໍ້ມູນສະຖິຕິຕ່າງໆ ບໍ່ລະອຽດຈະແຈ້ງ ແລະ ບໍ່ທ່ວງທັນເວລາ.

### 3.3. ບົດຮຽນທີ່ຖອດຖອນໄດ້

- ເອົາໃຈໃສ່ຍົກລະດັບດ້ານ ແນວຄິດ-ການເມືອງ ໃຫ້ແກ່ພະນັກງານວິຊາການ ເພື່ອເຊື່ອມຊຶມ ແລະ ກຳແໜ້ນແນວທາງ ຂອງພັກ ແລະ ນະໂຍບາຍຂອງລັດ, ກົດໝາຍ, ລະບຽບ ໃຫ້ເລິກເຊິ່ງກ່ວາເກົ່າ.
- ວິຊາການຂະແໜງລ້ຽງສັດ ແລະ ການປະມົງ ຕ້ອງໄດ້ປະສານສົມທົບກັບກົມກຽວໃນການວາງແຜນ ແລະ ການຈັດຕັ້ງປະຕິບັດກິດຈະກຳຮ່ວມກັນຢ່າງຕໍ່ເນື່ອງໃນແຕ່ລະໄລຍະ ເພື່ອເຮັດໃຫ້ການຜະລິດເປັນສິນຄ້າມີການຂະຫຍາຍຕົວຢ່າງແຂງແຮງ ແລະ ຕໍ່ເນື່ອງ.
- ທັນເອົາພະນັກງານລົງສູ່ຮາກຖານການຜະລິດໃຫ້ແທດເຖິງ ປະກອບພະນັກງານໃຫ້ເມືອງຢ່າງພຽງພໍ, ເອົາໃຈໃສ່ສ້າງຕັ້ງກຸ່ມການຜະລິດ, ກຸ່ມບໍລິການ ແລະ ເລັ່ງໃສ່ການຝຶກອົບຮົມໃຫ້ພະນັກງານ ແລະ ຊາວກະສິກອນໃຫ້ຫຼາຍຂຶ້ນ.
- ເອົາໃຈໃສ່ປະຕິບັດນະໂຍບາຍຍ້ອງຍໍຕໍ່ຜູ້ທີ່ມີຜົນງານ ແລະ ປະຕິບັດລະບຽບວິໄນຕໍ່ຜູ້ທີ່ລະເລີຍຕໍ່ໜ້າທີ່ຄວາມຮັບຜິດຊອບ.
- ປັບປຸງແບບແຜນວິທີເຮັດວຽກຂອງຂະແໜງ ຜັນຂະຫຍາຍແນວທາງໃຫ້ເປັນແຜນງານ, ໂຄງການລະອຽດມອບໃຫ້ບຸກຄົນຮັບຜິດຊອບ ໂດຍຖືເອົາການຕິດຕາມ, ກວດກາສະຫຼຸບຖອດຖອນບົດຮຽນປະຈຳອາທິດ, ເດືອນ, ໄຕມາດ ແລະ ປີ ເປັນບ່ອນອີງໃນການຈັດຕັ້ງປະຕິບັດວຽກ.
- ເພີ່ມທະວີຂອດປະສານງານກັບຂະແໜງການທີ່ກ່ຽວຂ້ອງ.

## 4. ທິດທາງແຜນການ ແລະ ຄາດໝາຍສູ້ຊົນ ປະຈຳປີ 2022

### 4.1. ເປົ້າໝາຍ

#### 4.1.1. ເປົ້າໝາຍລວມ

ພື້ນຖານເສດຖະກິດໃຫ້ມີການຂະຫຍາຍຕົວຕາມທິດທັນເປັນອຸດສາຫະກຳ ແລະ ທັນສະໄໝທີ່ໜັກແໜ້ນ, ຜະລິດຕະພັນຮັບປະກັນທັງປະລິມານ ແລະ ຄຸນນະພາບມີການແຂ່ງຂັນສູງ. ຮັບປະກັນໃຫ້ແກ່ການເຕີບໂຕທາງດ້ານເສດຖະກິດ ໃຫ້ຢູ່ໃນລະດັບເພີ່ມຂຶ້ນຕາມເກນປົກກະຕິ ມີປະສິດທິຜົນ, ໝັ້ນທ່ຽງ ແລະ ຮັບປະກັນຄວາມໝັ້ນຄົງທາງດ້ານສະບຽງອາຫານທັງຮັບປະກັນຄຸນນະພາບທາງດ້ານໂພສະນາການຢ່າງໜັກແໜ້ນ. ການຜະລິດທີ່ຖືກຕາມ

ຫຼັກການດ້ານ ສຸຂານາໄມ, ສະອາດ, ຮັບປະກັນຄວາມປອດໄພຕໍ່ຊີວິດ, ສຸຂະພາບຂອງຜູ້ຜະລິດ-ບໍລິໂພກແລະ ເປັນມິດຕໍ່ສິ່ງແວດລ້ອມ.

#### 4.1.2. ເປົ້າໝາຍທີ 1 : ການຜະລິດສະບຽງອາຫານ

ປີ 2022 ສູ້ຊົນຜະລິດທາດຊີ້ນ ແລະ ໄຂ່ໃຫ້ໄດ້ຫຼາຍກ່ວາ 36.592 ໂຕນ ແລະ ສັດນໍ້າ ໃຫ້ໄດ້ 28.28.776 ໂຕນ, ສູ້ຊົນຕອບສະໜອງອັດຕາການບໍລິໂພກທາດຊີ້ນລວມສະເລ່ຍ 67 ກິໂລຕໍ່ຄົນຕໍ່ປີ, ໃນນັ້ນ ເຂດຕົວເມືອງໃຫ້ໄດ້ 75 ກິໂລຕໍ່ຄົນຕໍ່ປີ ແລະ ເຂດຊົນນະບົດໃຫ້ໄດ້ 60 ກິໂລຕໍ່ຄົນຕໍ່ປີ ຫຼື ໃຫ້ປະຊາຊົນໄດ້ຮັບພະລັງງານຈາກທາດຊີ້ນສະເລ່ຍ 422 ກິໂລກາລໍຣີຕໍ່ຄົນຕໍ່ວັນ ແລະ ສູ້ຊົນເຮັດໃຫ້ການຂະຫຍາຍຕົວຂອງຝູງສັດຢູ່ໃນລະດັບ 4-6 % ໃນນັ້ນ ງົວ-ຄວາຍ ລະດັບ 2-3 %, ໝູ 6% ແລະ ສັດປີກ 6%.

#### 4.1.3. ເປົ້າໝາຍທີ 2 : ການຜະລິດເປັນສິນຄ້າ

ສູ້ຊົນຫັນການລ້ຽງສັດແບບທຳມະຊາດ ໄປສູ່ການລ້ຽງແບບເປັນຟາມ ໃຫ້ສະໜອງຜົນຜະລິດໃຫ້ໄດ້ 91% ຂອງຄວາມຕ້ອງການທາດຊີ້ນໃນນະຄອນຫຼວງ ສຸມໃສ່ການລ້ຽງສັດພັນປັບປຸງເພື່ອເປັນສິນຄ້າສະໜອງຕະຫຼາດພາຍໃນໃຫ້ພຽງພໍ ແລະ ສູ້ຊົນສືບຕໍ່ສ້າງໃຫ້ເປັນບ່ອນສະໜອງແນວພັນຄຸນນະພາບດີ (ໝູ, ສັດປີກ ແລະ ສັດນໍ້າ) ຫຼຸດຜ່ອນການນຳເຂົ້າແນວພັນ ແລະ ໃຫ້ຈຳໜ່າຍອອກຕ່າງແຂວງ.

### 4.2. ເນື້ອໃນວຽກງານຈຸດສຸມ ແລະ ບັນດາມາດຕະການຈັດຕັ້ງປະຕິບັດ

#### 4.2.1. ມາດຕະການສຳລັບການຜະລິດສະບຽງອາຫານ

1) ມາດຕະການດ້ານການລ້ຽງສັດ

- <u>ການລ້ຽງສັດກີບ</u> (ງົວ, ຄວາຍ ແລະ ແບ້)

ສັດໃຫຍ່ປະເພດງົວ-ຄວາຍ ມີບົດບາດທີ່ສຳຄັນໃນການສະໜອງສະບຽງອາຫານ, ປີ 2022 ເພື່ອຕອບສະໜອງໃຫ້ໄດ້ຕາມຄວາມຕ້ອງການບໍລິໂພກໃນນະຄອນຫຼວງວຽງຈັນ ຈະຕ້ອງຜະລິດຊີ້ນງົວໃຫ້ໄດ້ຫຼາຍກ່ວາ 1.485 ໂຕນ (65% ຂອງຄວາມຕ້ອງການ), ຊີ້ນຄວາຍໃຫ້ໄດ້ຫຼາຍກ່ວາ 216 ໂຕນ (27% ຂອງຄວາມຕ້ອງການ) ແລະ ຊີ້ນແບ້ໃຫ້ໄດ້ຫຼາຍກວ່າ 126 ໂຕນ (ລື່ນ 77% ຂອງຄວາມຕ້ອງການ), ໃນເງື່ອນໄຂທີ່ນະຄອນຫຼວງວຽງຈັນ ມີການຂະຫຍາຍຕົວທາງເສດຖະກິດ ແລະ ສັງຄົມຢ່າງກ້າວກະໂດດ, ມີການຂະຫຍາຍຕົວເມືອງອອກເລື້ອຍໆ ເຮັດໃຫ້ເນື້ອທີ່ຄັງຫຍ້າທຳມະຊາດທີ່ເຄີຍລ້ຽງສັດຫຼຸດໜ້ອຍຖອຍລົງ.

ໃນການຕອບສະໜອງ ໃຫ້ໄດ້ຄວາມຕ້ອງການບໍລິໂພກຊີ້ນງົວ-ຄວາຍ ແລະ ຂະຫຍາຍຝູງໃຫ້ໄດ້ 2-3% ຕ້ອງສົ່ງເສີມການລ້ຽງສັດໃຫຍ່ໃນເມືອງເປົ້າໝາຍ "ເມືອງນາຊາຍທອງ, ໄຊທານີ, ຫາດຊາຍຟອງ, ສັງທອງ ແລະ ປາກງື່ມ" ໂດຍຈະຕ້ອງເນັ້ນໃສ່ຫົວໜ່ວຍຄອບຄົວ, ການປູກຫຍ້າລ້ຽງສັດ (ຫຍ້າພັນຄຸນນະພາບສູງ) ໃຫ້ໄດ້ຢ່າງໜ້ອຍ 500 ເຮັກຕາ ຕິດພັນກັບການຍົກສູງຜະລິດຕະພາບ, ການກັນພະຍາດ ແລະ ການເຂົ້າເຖິງສິນເຊື່ອໃນການລ້ຽງສັດກີບເອື້ອງ.

- <u>ການລ້ຽງໝູ</u>

ຕ້ອງສູ້ຊົນຜະລິດຊີ້ນໝູໃຫ້ໄດ້ຫຼາຍກ່ວາ 15.892 ໂຕນ ຂອງຄວາມຕ້ອງການບໍລິໂພກ ແລະ ສົ່ງອອກຕ່າງແຂວງ, ເຊິ່ງໃນປີ 2022 ປະລິມານຊີ້ນໝູຂອງນະຄອນຫຼວງວຽງຈັນປະມານ 90% ແມ່ນມາຈາກໝູລ້ຽງແບບເປັນຟາມ ແລະ 10% ແມ່ນມາຈາກການລ້ຽງແບບຄອບຄົວ ແລະ ໃຫ້ສົ່ງອອກໝູຊີ້ນໄປຕ່າງແຂວງໃຫ້ໄດ 2 ຫາ 5%, ເພື່ອເຮັດໃຫ້ບັນລຸຄາດໝາຍດັ່ງກ່າວນັ້ນ ຈະຕ້ອງເລັ່ງໃສ່ການລ້ຽງໝູໃນຂອບເຂດນະຄອນຫຼວງວຽງຈັນ ໂດຍສະເພາະເມືອງ ນາຊາຍທອງ, ໄຊທານີ, ສັງທອງ ແລະ ປາກງື່ມ ທີ່ປະຊາຊົນມີມູນເຊື້ອໃຫ້ຕິດພັນກັບການຍົກລະດັບ ແລະ ຫັນປ່ຽນເຕັກນິກການລ້ຽງທີ່ໃຫ້ຜົນຜະລິດສູງ ແລະ ຖືກຕາມຫຼັກສຸຂານະໄມ, ການປ້ອງກັນພະຍາດທີ່ດີລວມທັງບໍ່ສົ່ງຜົນກະທົບຕໍ່ສັງຄົມ ແລະ ສິ່ງແວດລ້ອມເປັນສຳຄັນ.

- <u>ການລ້ຽງສັດປີກ</u>

ສົ່ງເສີມການລ້ຽງສັດປີກໃນນະຄອນຫຼວງວຽງຈັນ ໃຫ້ສາມາດສະໜອງຊີ້ນ ໃຫ້ໄດ້ 4.444 ໂຕນ (55%ຂອງຄວາມຕ້ອງການ) ແລະ ໄຂ່ໃຫ້ໄດ້ 14.363 ໂຕນ, ເພື່ອບັນລຸຄາດໝາຍດັ່ງກ່າວນັ້ນຈະຕ້ອງໄດ້ສົ່ງເສີມຂະບວນການນໍາໃຊ້ເຕັກນິກທີ່ດີ ຖືກຕ້ອງຕາມຫຼັກການຄວາມປອດໄພທາງດ້ານຊີວະ ທີສາມາດເພີ່ມການລ້ຽງຂອງປະຊາຊົນໃຫ້ສູງຂຶ້ນ ໂດຍເນັ້ນໃສ່ເຂດນອກເທດສະບານເຂດຊານເມືອງ ແລະ 5 ເມືອງນອກ: ເມືອງ ນາຊາຍທອງ, ໄຊທານີ, ຫາດຊາຍຟອງ, ສັງທອງ ແລະ ປາກງື່ມ, ໂດຍເລັ່ງໃສ່ການຜະລິດແນວພັນຄຸນນະພາບດີ ແລະ ຈະເລີນເຕີບໂຕໄວສະໜອງໃຫ້ການລ້ຽງແບບຄອບຄົວທົ່ວໄປ ແລະ ແບບເປັນຟາມ.

2) ມາດຕະການດ້ານການປະມົງ

ນະຄອນຫຼວງວຽງຈັນ ຕ້ອງຜະລິດ ແລະ ສະໜອງຊີ້ນສັດນໍ້າ ໃຫ້ໄດ້ 28.776 ໂຕນ (ປາ 28.345 ໂຕນ ແລະ ກົບ 431 ໂຕນ), ເພື່ອຈະເຮັດໃຫ້ບັນລຸຕົວເລກດັ່ງກ່າວຈະຕ້ອງເລັ່ງໃສ່ການພັດ ທະນາການລ້ຽງສັດນໍ້າ ດັ່ງນີ້:

– ສູ້ຊົນຂະຫຍາຍບ່ອນລ້ຽງ ແລະ ຂະຫຍາຍພັນປາ ໃຫ້ສາມາດຜະລິດລູກປາທັງໝົດໃຫ້ໄດ້ 40 ຫາ 42 ລ້ານໂຕ ໂດຍຊຸກຍູ້ແຫຼ່ງຜະລິດປານ້ອຍ ຈໍານວນ 15 ແຫ່ງ, ໃນນີ້ຕ້ອງຜະລິດແນວພັນປາພື້ນທີ່ເມືອງທີ່ເປັນເສດຖະກິດ;

– ສຸມໃສ່ການພັດທະນາ ແລະ ສົ່ງເສີມການລ້ຽງປາ ແລະ ປານໍ້າຂອງທີ່ມີທ່າແຮງທາງດ້ານເສດຖະກິດ ແລະ ສັດນໍ້າທຸກຊະນິດ ໃນເຂດທີ່ມີເງື່ອນໄຂ ເຊັ່ນ: ການລ້ຽງປາປະສົມກັບການລ້ຽງສັດ, ການສ້າງຟາມລ້ຽງປາ, ລ້ຽງປາໃສ່ກະຊັງ ແລະ ລ້ຽງປາໃສ່ໜອງ ໃນເມືອງ ນາຊາຍທອງ, ໄຊທານີ, ຫາດຊາຍຟອງ ແລະ ປາກງື່ມ;

– ສົມທົບກັບຫ້ອງການກະສິກໍາ ແລະ ປ່າໄມ້ປະຈໍາ 9 ຕົວເມືອງ ສ້າງຂະບວນການປ່ອຍປາໃນວັນປ່ອຍປາແຫ່ງຊາດ 13 ກໍລະກົດ, ປ່ອຍ**ປາ**ຄືນສູ່ແຫຼ່ງນໍ້າທໍາມະຊາດ ໃຫ້ໄດ້ 8.000.000ໂຕ.

3) ມາດຕະການທາງດ້ານສັດຕະວະແພດ

ວຽກງານດ້ານສັດຕະວະແພດ ນັບວ່າເປັນປັດໃຈທີ່ຂາດບໍ່ໄດ້ສໍາລັບການລ້ຽງສັດ ຍ້ອນວ່າມັນມີຄວາມສໍາຄັນຮັບປະກັນທາງດ້ານສຸຂະພາບຂອງສັດ, ຕໍ່ຜູ້ບໍລິໂພກ ແລະ ຮັບປະກັນຄວາມສ່ຽງ, ຊ່ວຍເພີ່ມຜົນຜະລິດໃຫ້ແກ່ການລ້ຽງສັດ, ສະນັ້ນ ການຄຸ້ມຄອງ ແລະ ການບໍລິການສັດຕະວະແພດຈຶ່ງມີຄວາມຈໍາເປັນຫຼາຍ ໃນປີ 2022 ມີໜ້າວຽກ ດັ່ງນີ້:

– ຈັດຕັ້ງການໂຄສະນາເຜີຍແຜ່ ແລະ ປຸກລະດົມ ຂະບວນການສັກຢາກັນພະຍາດສັດຢ່າງກ້ວາງຂວາງໃຫ້ໄດ້ 75% ຂອງຝູງສັດ ໃນນັ້ນຟາມໃຫ້ໄດ້ 100%, ສໍາລັບສັດໃຫ່ຍຕ້ອງສູ້ຊົນເຮັດໃຫ້ອັດຕາການຕາຍຍ້ອນພະຍາດເຕົ້າໂຮມເລືອດງົວ-ຄວາຍ ແລະ ພະຍາດໄຂ້ບວມຫຼຸດລົງ, ເພີ້ມທະວີການກັນ ແລະ ຄວບຄຸມພະຍາດປາກເປື່ອຍລົງເລັບ ໃນງົວ, ຄວາຍ ແລະ ໝູ ສໍາລັບໝູຕ້ອງໄດ້ເອົາໃຈໃສ່ລະວັງ ແລະ ສະກັດກັ້ນພະຍາດອະຫິວາໝູ, ພະຍາດຫູກໍ່າໝູ ໂດຍສະເພາະການລ້ຽງໝູແບບເປັນຟາມຮັບປະກັນບໍ່ໃຫ້ມີກໍລະນີເກີດການລະບາດຂອງພະຍາດຮ້າຍແຮງຂຶ້ນ, ເປັນຕົ້ນໃນເຂດທີ່ມີຄວາມສ່ຽງຕໍ່ພະຍາດດັ່ງກ່າວໃນແຕ່ລະປີ. ສໍາລັບສັດປີກຕ້ອງສູ້ຊົນສົ່ງເສີມການນໍາໃຊ້ຢາກັນພະຍາດນິວຄາເຊີນ ແລະ ພະຍາດອະຫິວາສັດປີກຢ່າງແຂງແຮງ ຄຽງຄູ່ກັບການປ້ອງກັນ ແລະ ຄວບຄຸມພະຍາດສັດເສດຖະກິດ, ຕ້ອງໄດ້ສືບຕໍ່ຮ່ວມມືກັບອົງການຈັດຕັ້ງສາກົນເພື່ອປ້ອງກັນ ແລະ ຄວບຄຸມພະຍາດສັດຕິດຕໍ່ໃສ່ຄົນ;

– ຂະຫຍາຍຕາໜ່າງການບໍລິການດ້ານສັດຕະວະແພດທັງພາກລັດ ແລະ ເອກະຊົນ ໃຫ້ທົ່ວເຖິງທຸກເມືອງ ແລະ ຖົ່ວເຖິງ, ພັດທະນາລະບົບການຄຸ້ມຄອງ ແລະ ຊຸກຍູ້ສົ່ງເສີມການບໍລິການຂອງສັດຕະວະແພດ

ບ້ານໃຫ້ເຄື່ອນໄຫວໄດ້ຕາມພາລະໜ້າທີ່ຂອງຕົນ ແລະ ລະບຽບກົດໝາຍກຳນົດໄວ້, ຝຶກອົບຮົມຕາໜ່າງສັດຕະວະແພດປະຈຳບ້ານ ໃຫ້ໄດ້ຈຳນວນ 50 ຄົນ;

– ເອົາໃຈໃສ່ເຝົ້າລະວັງພະຍາດສັດ, ພະຍາດສັດນ້ຳ ໂດຍສະເພາະຕາໜ່າງສັດຕະວະແພດບ້ານໃນຂອບເຂດທົ່ວນະຄອນຫຼວງວຽງຈັນ ເພື່ອດຳເນີນການເຝົ້າລະວັງ, ລາຍງານສະພາບການລະບາດຂອງພະຍາດສັດໃຫ້ຖືກຕ້ອງວ່ອງໄວ ແລະ ໃຫ້ສາມາດຕອບໂຕ້ໄດ້ທັນກັບສະພາບການ ໂດຍສະເພາະພະຍາດໄຂ້ ຫວັດສັດປີກ ສຸມໃສ່ 04 ເມືອງທີ່ມີຊາຍແດນຕິດກັບນ້ຳຂອງ (ເມືອງ ສີໂຄດຕະບອງ, ຫາດຊາຍຟອງ, ສັງທອງ ແລະ ປາກງື່ມ) ດ້ວຍວິທີການເຝົ້າລະວັງແບບເຄັ່ງຄັດ;

– ພັດທະນາວຽກງານກວດກາອະນາໄມຊີ້ນ ໃນໂຮງຂ້າສັດ ແລະ ຈຸດ ຂ້າສັດຍ່ອຍ, ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຄັດສົມໂຮງຂ້າສັດ ໃນລະດັບມາດຕະຖານການສົ່ງອອກ ໃຫ້ ໄດ້ 02 ແຫ່ງ ແລະລະດັບມາດຕະຖານຮັບໃຊ້ພາຍໃນ ໃຫ້ໄດ້ 07 ແຫ່ງ ເນັ້ນໃສ່ 05 ເມືອງນອກ;

– ພັດທະນາຫ້ອງວິໄຈຜະລິດຕະພັນສັດ ດ້ານເຕັກນິກ ໃຫ້ໄດ້ມາດຕະຖານ, ເພື່ອໃຫ້ກາຍເປັນສູນວິໄຈອ້າງອີງຄວາມປອດໄພທາງດ້ານຜະລິດຕະພັນສັດ, ເປັນບ່ອນຮ່ວມມື ແລະ ແລກປ່ຽນບົດຮຽນ, ໃຫ້ເປັນບ່ອນຝຶກອົບຮົມໃຫ້ແກ່ນັກສຶກສາຈາກສະຖາບັນສຶກສາຂອງສາຂາທີ່ກ່ຽວຂ້ອງ;

– ສຶກສາ ແລະ ກຳນົດເຂດທີ່ມີເງື່ອນໄຂເປັນເຂດປອດ ຫຼື ເຂດກັນຊົນຂອງພະຍາດສັດບາງຊະນິດແນ່ໃສ່ກ້າວໄປສູ່ການສະເໜີໃຫ້ເປັນເຂດປອດພະຍາດສັດຢ່າງເປັນທາງການ ເນັ້ນໃສ່ພະຍາດສັດໃຫຍ່ ໃນ 05 ເມືອງນອກ ສ້າງໃຫ້ໄດ້ເປົ້າໝາຍສ້າງເປັນບ້ານປອດພະຍາດ 01 ຫາ 02 ບ້ານ ໃນໜຶ່ງເມືອງ;

– ຢາຕົກຄ້າງໃນສັດ ຈຳນວນ 2.000 ຕົວຢ່າງ, ປາ ຈຳນວນ 150 ຕົວຢ່າງ ແລະ ກວດກາສານເຄມີປົນເປື້ອນ 800 ຕົວຢ່າງ (ໂດຍເນັ້ນໜັກໃສ່ຕະຫຼາດ 04 ເມືອງໃນ);

– ຮ່ວມມືປະສານສົມທົບກັບອົງການຈັດຕັ້ງສາກົນ ແລະ ຕ່າງປະເທດ ໃນການສະກັດກັ້ນພະຍາດສັດຂ້າມຊາຍແດນ ເຊັ່ນ: ພະຍາດໄຂ້ຫວັດສັດປີກ, ພະຍາດປາກເປື່ອຍລີບເລັບ ແລະ ພະຍາດອື່ນໆ ລວມທັງພະຍາດອຸບັດຂຶ້ນໃໝ່ ແລະ ພະຍາດຕິດຕໍ່ຈາກສັດສູ່ຄົນ.

**4.2.2. ມາດຕະການສຳລັບການຜະລິດເປັນສິນຄ້າ**

1) ການລ້ຽງງົວເປັນສິນຄ້າ

ງົວແມ່ນສັດທີ່ມີຄວາມອາດສາມາດພັດທະນາເປັນສິນຄ້າ, ໂດຍອີງໃສ່ທ່າແຮງ ແລະ ຄວາມຕ້ອງການຂອງຕະຫຼາດໃນນະຄອນຫຼວງວຽງຈັນ ແລະ ຕ່າງປະເທດ ຈະຕ້ອງໄດ້ພັດທະນາການລ້ຽງງົວໂດຍສົ່ງ ເສີມໃຫ້ມີການສ້າງຟາມ ດັ່ງລຸ່ມນີ້:

– ສົ່ງເສີມບຸກຄົນ ແລະ ຜູ້ປະກອບການຫຼືກຸ່ມການຜະລິດສ້າງຟາມລ້ຽງງົວພື້ນເມືອງ ເພື່ອການສົ່ງອອກ ໃຫ້ມີການຂະຫຍາຍຕົວໃຫ້ຕິດພັນກັບການປັບປຸງພັນ, ການລ້ຽງງົວພັນຊີ້ນລູກປະສົມດ້ວຍການປະສົມພັນທຽມ, ຂະຫຍາຍທົ່ງຫຍ້າລ້ຽງສັດຢູ່ບັນດາເມືອງທີ່ມີເງື່ອນໄຂ ຄື: ເມືອງນາຊາຍທອງ, ໄຊທານີ, ຫາດຊາຍຟອງ, ສັງທອງ ແລະ ປາກງື່ມ.

– ຄຽງຄູ່ກັບການລ້ຽງງົວແບບເປັນຟາມ ຕ້ອງໄດ້ສົ່ງເສີມຊາວກະສິກອນຂະຫຍາຍການປູກຫຍ້າອາຫານສັດຢ່າງກ້ວາງຂວາງ ຄາດໝາຍບໍ່ໃຫ້ຫຼຸດ 500 ເຮັກຕາຕໍ່ປີ, ສົ່ງເສີມການນຳໃຊ້ສິ່ງເສດເຫຼືອຈາກການປູກຝັງ ແລະ ອຸດສະຫະກຳປຸງແຕ່ງເປັນອາຫານສັດ;

– ເຜີຍແຜ່ການຂຶ້ນທະບຽນພິມສັດ ໃຫ້ແກ່ເຈົ້າຂອງຟາມ, ຜູ້ລ້ຽງສັດ ຮັບຮູ້ ແລະ ລົງຈັດຕັ້ງຂຶ້ນທະບຽນພິມສັດ ໃຫ້ໄດ້ 5.000 ໂຕ ແນໃສ່ເມືອງສັງທອງ ສ້າງໃຫ້ເປັນເມືອງຕົວແບບໃນການຂຶ້ນທະບຽນພິມສັດ;

– ຄັດເລືອກງົວແມ່ສາວໃຫ້ໄດ້ 3.000 ຫາ 3.500 ໂຕ ເປັນງົວແມ່ພື້ນຖານໃນການ ປະສົມພັນທຽມ ແລະ ປະສົມພັນທຽມໃຫ້ໄດ້ 1.000 ໂຕ (ໂຄງການຮ່ວມມື ນະຄອນຫຼວງວຽງຈັນ ແລະ ນະຄອນໂຮ່ຈິມິນ).

2) ການລ້ຽງໝູເປັນສິນຄ້າ

ການລ້ຽງໝູ ແມ່ນມີທ່າແຮງເພື່ອຜະລິດເປັນສິນຄ້າ, ມີຫຼາຍຟາມໄດ້ມີການຫັນຈາກການລ້ຽງແບບຟາມເປີດ ມາເປັນແບບລະບົບແບບຟາມປິດ ສາມາດສະໜອງໃຫ້ຕະຫຼາດພາຍໃນ, ຊຸກຍູ້ການລົງທຶນພາກສ່ວນເສດຖະກິດເອກກະຊົນເຂົ້າໃສ່ການລ້ຽງ ແລະ ການຂະຫຍາຍ ພໍ່ແມ່ພັນລຸ້ນ 2 (F2) ໃຫ້ເພີ້ມຂຶ້ນ 5 ຫາ 7% ເນັ້ນໃສ່ການຜະລິດຢູ່ເມືອງ ນາຊາຍທອງ, ໄຊທານີ, ສັງທອງ ແລະ ປາກງື່ມ, ເພື່ອຜະລິດ ແລະ ສະໜອງໝູນ້ອຍຢ່າງໜ້ອຍໃຫ້ໄດ້ 280.000 ໂຕ, ຕ້ອງສະໜອງໝູຊີ້ນໃຫ້ໄດ້ 240.000 ຫາ 250.000 ໂຕ, ສະໜອງໃຫ້ແຕ່ລະຟາມເພື່ອບັນລຸເປົ້າໝາຍຍຸດທະສາດ 2021 ຫາ 2025 ແລະ ຫຼຸດຜ່ອນການນໍາເຂົ້າກ້າວໄປສູ່ການກຸ້ມຕົນເອງ ແລະຜະລິດໃຫ້ເປັນສິນຄ້າ.

3) ການລ້ຽງສັດປີກເປັນສິນຄ້າ

ການລ້ຽງສັດປີກເປັນສິນຄ້າ ເພື່ອສະໜອງຄວາມຕ້ອງການຂອງຕະຫຼາດພາຍໃນ ໃຫ້ສາມາດກຸ້ມຕົນເອງໄດ້ຢ່າງໝັ້ນຄົງ ຕ້ອງສົ່ງເສີມການລ້ຽງພໍ່-ແມ່ພັນ ສາຍພັນທີ່ໃຫ້ຜົນຜະລິດສູງ ໃຫ້ບັນດາເມືອງຍຸດທະສາດ (ເມືອງ ນາຊາຍທອງ ແລະ ໄຊທານີ) ໂດຍສະເພາະພໍ່ແມ່ພັນໄກ່ໄຂ່ ແລະ ໄກ່ສາມສາຍເລືອດ ໃຫ້ເພີ້ມຂຶ້ນໂດຍມີເປົ້າໝາຍໃຫ້ສາມາດສະໜອງໄກ່ນ້ອຍໃຫ້ການລ້ຽງຂອງປະຊາຊົນ ແລະ ຂອງຟາມໃຫ້ໄດ້ 1.300.000 ຫາ 1.350.000 ໂຕ.

4) ການລ້ຽງປາເປັນສິນຄ້າ

ການລ້ຽງປາໃສ່ໜອງ ແລະ ປານິນກະຊັງແມ່ນຮູບແບບການລ້ຽງປາທີ່ໃຫ້ຜົນຜະລິດສູງ ແລະເປັນສິນຄ້າ ໂດຍສະເພາະການລ້ຽງປານິນກະຊັງຕາມແມ່ນໍ້າຂອງ ແລະ ແມ່ນນໍ້າງື່ມ ທີ່ມີທ່າແຮງໃຫ້ມີຈໍານວນກະຊັງປາ 2.576 ກະຊັງ ຜົນຜະລິດສະເລ່ຍ 12.880 ໂຕນ/ປີ ສະໜອງໃຫ້ຕະຫຼາດ ແລະ ມີປະລິມານເພີ່ມຂຶ້ນໃນການສົ່ງອອກຈໍາໜ່າຍຕ່າງແຂວງ.

5) ດ້ານແນວພັນສັດ

ແນວພັນສັດແມ່ນປັດໃຈສໍາຄັນ ເປັນຕົວຊີ້ວັດໃຫ້ແກ່ການສະໜອງທາດຊີ້ນ, ໂດຍສະເພາະພໍ່-ແມ່ພັນສັດ ທີ່ຜ່ານການຄັດເລືອກທາງດ້ານປະລິມານ ແລະ ຄຸນນະພາບ, ປະຈຸບັນການລ້ຽງ ສັດໃຫ່ຍປະເພດງົວ, ຄວາຍ ແລະ ແບ້ແມ່ນມີທ່າອ່ຽງຫຼຸດລົງດ້ວຍປັດໃຈດ້ານຕ່າງໆ, ເພື່ອສະໜອງທາດຊີ້ນໃຫ້ນະຄອນຫຼວງວຽງຈັນຈຶ່ງຫັນໃສ່ການລ້ຽງສັດທີ່ຮອບວຽນການຜະລິດໄວເປັນຕົ້ນແມ່ນໝູ, ສັດປີກ ແລະ ປາ, ປີ 2022 ຄວາມຕ້ອງການບໍລິໂພກຊີ້ນໃນນະຄອນຫຼວງວຽງຈັນ 68.033 ໂຕນ, ຄວາມຕ້ອງການແນວພັນ ມີຄື: ຄວາມຕ້ອງການຊີ້ນໝູ 19.088 ໂຕນ, ຕ້ອງການລູກໝູຢ່ານົມ ໃຫ້ໄດ້ 375.000 ໂຕ ຫາ 380.000 ໂຕ (ຕ້ອງມີແມ່ພັນ 18.770 ໂຕ), ຄວາມຕ້ອງການຊີ້ນສັດປີກ 8.034 ໂຕນ, ຕ້ອງຜະລິດໄກ່ນ້ອຍໃຫ້ໄດ້ 1.700.000 ໂຕ (ພໍ່ພັນ-ແມ່ພັນຕ້ອງເພີ້ມຂຶ້ນ 5-6%) ແລະ ຕ້ອງການປານ້ອຍ 167.000.000 ຫາ 180.000.000 ໂຕ ທັງລ້ຽງແບບເປັນຟາມ ແລະ ແບບຄອບຄົວ.

6) ການຜະລິດອາຫານສັດ

ອາຫານສັດນັບເປັນປັດໃຈຂອງການລ້ຽງສັດອັນດັບໜຶ່ງ ຍ້ອນວ່າມັນກວມເອົາມູນຄ່າລົງທຶນໃສ່ການລ້ຽງສັດເຖິງ 60 ຫາ 70 % ປີ 2022 ນະຄອນຫຼວງວຽງຈັນ ຕ້ອງການອາຫານສັດປະມານ 263.000

(ອາຫານໝູ 98.000 ໂຕນ, ອາຫານສັດປີກ 120.000 ໂຕນ ແລະ ອາຫານປາ 45.000 ໂຕນ) ເຊິ່ງປະຈຸບັນພວກເຮົາສາມາດຜະລິດອາຫານສັດໄດ້ 332.500 ໂຕນ/ປີ ເຊິ່ງເຫັນວ່າພຽງພໍກັບຄວາມຕ້ອງການ ຈຶ່ງຈຳເປັນຕ້ອງໄດ້ພັດທະນາຍົກລະດັບຄຸນນະພາບໃຫ້ສູງຂຶ້ນ ເພື່ອເປັນທີ່ຍອມຮັບຂອງຜູ້ປະກອບການພ້ອມທັງຊຸກ ຍູ້ສົ່ງເສີມການນຳໃຊ້ວັດຖຸດິບທີ່ມີໃນທ້ອງຖິ່ນປຸງແຕ່ງເປັນອາຫານສັດ ເພື່ອໃຊ້ພາຍໃນເພີ່ມຂຶ້ນ 10% ຫາ 15%, ເພື່ອຫຼຸດຜ່ອນການນຳເຂົ້າອາຫານສັດຈາກຕ່າງປະເທດເທື່ອລະກ້າວ.

**4.3. ແຜນງານ ແລະ ໂຄງການສະໜັບສະໜູນ**

ໃນການພັດທະນາວຽກງານ ປີ 2022 ໃຫ້ໄດ້ຮັບຜົນ, ນອກຈາກວຽກງານວິຊາສະເພາະແລ້ວ, ຈຳເປັນຕ້ອງໄດ້ຜັນຂະຫຍາຍແຜນງານ ແລະ ໂຄງການສະເພາະ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດ ເປົ້າໝາຍດ້ານສະບຽງອາຫານ ແລະ ຜະລິດສິນຄ້າ ໃຫ້ປະກົດຜົນເປັນຈິງຕາມທິດທາງຂອງນະຄອນຫຼວງວຽງຈັນ ກໍ່ຄືກະຊວງກະສິກຳ ແລະ ປ່າໄມ້, ຕາມແຜນງານ ແລະ ໂຄງການສະໜັບສະໜູນ (ໃນ 7 ແຜນງານ ແລະ 69 ໂຄງການ) ຜັນຂະຫຍາຍໃຫ້ແທດເໝາະກັບສະພາບເງື່ອນໄຂຕົວຈິງ ຂອງນະຄອນຫຼວງວຽງຈັນ ແລະ ສະເໜີແຜນໂຄງການຜະລິດສັດ ແລະ ສັດນ້ຳ ເພື່ອຄ້ຳປະກັນສະບຽງອາຫານ ແລະ ຜະລິດເປັນສິນຄ້າ ນະຄອນຫຼວງວຽງຈັນ.

**4.4. ວິທີຈັດຕັ້ງປະຕິບັດ, ການຕິດຕາມກວດກາ ແລະ ປະເມີນຜົນ**

**4.4.1. ການຈັດຕັ້ງປະຕິບັດ**

- ຈັດຕັ້ງຜັນຂະຫຍາຍກົດໝາຍ, ດຳລັດ, ຂໍ້ຕົກລົງ, ມາດຖານເຕັກນິກ, ລະບຽບການທີ່ກ່ຽວຂ້ອງເພື່ອຄຸ້ມຄອງ ແລະ ພັດທະນາຂະແໜງການໃຫ້ປະສົບຜົນສຳເລັດ.
- ສ້າງເປັນແຜນດຳເນີນງານ ແລະ ໂຄງການລະອຽດບົນພື້ນຖານສະພາບ, ເງື່ອນໄຂຈຸດພິເສດ, ທ່າແຮງດ້ານຕ່າງໆ ແລະ ຄວາມອາດສາມາດບົ່ມຊ້ອນຕົວຈິງຂອງນະຄອນຫຼວງວຽງຈັນ, ພ້ອມທັງສູ້ຊົນຈັດຕັ້ງປະຕິບັດແຜນດັ່ງກ່າວໃຫ້ປະກົດຜົນເປັນຈິງ.
- ປະສານສົມທົບ ແລະ ຮ່ວມມືກັບອົງການຈັດຕັ້ງຕ່າງໆທັງພາຍໃນ ແລະ ສາກົນ, ເພື່ອສຸມໃສ່ການພັດທະນາ ວຽກງານລ້ຽງສັດ ແລະ ການປະມົງ ຢູ່ນະຄອນຫຼວງວຽງຈັນ.
- ຊຸກຍູ້, ສົ່ງເສີມໃສ່ວຽກງານການລ້ຽງສັດ ແລະ ການປະມົງຂອງຜູ້ປະກອບການພາຍໃນ ແລະ ຕ່າງປະເທດ, ໂດຍສະເພາະວຽກງານຜະລິດແນວພັນຄຸນນະພາບດີ, ການຜະລິດອາຫານສັດ ແລະ ການລ້ຽງສັດດ້ວຍເຕັກນິກໃໝ່.
- ແຕ່ງຕັ້ງຄະນະຮັບຜິດຊອບຂັ້ນຂະແໜງ ເພື່ອຊີ້ນຳໆພາຈັດຕັ້ງປະຕິບັດແຜນການປະຈຳປີ 2021 ໃຫ້ເປັນຂະບວນຟົດຟື້ນ ແລະ ສຳເລັດຜົນຕາມຄາດໝາຍວາງອອກ, ພ້ອມທັງຕ້ອງໄດ້ລົງຕິດຕາມ, ກວດກາ, ຊຸກຍູ້ ແລະ ສັງລວມຈາກພາກສ່ວນຕ່າງໆ ເພື່ອລາຍງານເປັນແຕ່ລະໄລຍະ.
- ພະນັກງານລັດຖະກອນທຸກພາກສ່ວນທີ່ຂຶ້ນກັບຂະແໜງລ້ຽງສັດ ແລະ ການປະມົງນະຄອນຫຼວງວຽງຈັນ ຕ້ອງໄດ້ຄົ້ນຄ້ວາກຳແໜ້ນເນື້ອໃນຈິດໃຈແຜນການສະບັບນີ້ ນຳໄປຜັນຂະຫຍາຍເປັນໂຄງການລະອຽດເພື່ອຈັດຕັ້ງປະຕິບັດໃນໜ່ວຍງານ ແລະ ຈຸງານຂອງຕົນຮັບຜິດຊອບ.
- ຫັນເອົາພະນັກງານລົງໃກ້ສິດຕິແທດກັບຊາວກະສິກອນຢ່າງຕໍ່ເນື່ອງ ເຮັດໃຫ້ວຽກງານການຜະລິດມີການຂະຫຍາຍຕົວ ຕາມທິດທາງແຜນການທີ່ວາງໄວ້ຢ່າງມີຈຸດສຸມ ທັງວຽກງານຜະລິດສະບຽງອາຫານ ແລະ ວຽກງານຜະລິດເປັນສິນຄ້າ.
- ປັບປຸງກົນໄກບໍລິການ ເພື່ອອຳນວຍຄວາມສະດວກໃຫ້ແກ່ການເຄື່ອນໄຫວ ການຜະລິດຂອງປະຊາຊົນ ແລະ ຂອງຜູ້ປະກອບການ.

### 4.4.2. ການຕິດຕາມກວດກາ ແລະ ການປະເມີນຜົນ

ການຕິດຕາມ, ກວດກາ ແລະ ປະເມີນຜົນເປັນວຽກໜຶ່ງທີ່ສຳຄັນ ແລະ ຂາດບໍ່ໄດ້ໃນການຈັດຕັ້ງປະຕິບັດແຜນການ ແລະ ການຄຸ້ມຄອງການລົງທຶນຂອງລັດ ໃນວຽກງານລ້ຽງສັດ ແລະ ການປະມົງ, ແມ່ນການຕີລາຄາຖອດຖອນບົດຮຽນ ເພື່ອປັບປຸງວຽກງານໃນແຕ່ລະໄລຍະໃຫ້ສອດຄ່ອງ ແລະ ສາມາດບັນລຸເຖິງຈຸດປະສົງຄາດໝາຍທີ່ກຳນົດໄວ້ໃນແຜນສົກປີ, ພ້ອມກັນນັ້ນກໍ່ຊອກໃຫ້ເຫັນຂໍ້ຄົງຄ້າງ ແລະ ຂໍ້ຂາດຕົກບົກຜ່ອງ ໃນການຈັດຕັ້ງປະຕິບັດວຽກງານຕົວຈິງ ແນ່ໃສ່ແກ້ໄຂຈຸດອ່ອນ, ຂໍ້ຄົງຄ້າງດັ່ງກ່າວລວມທັງຖອດຖອນບົດຮຽນເພື່ອປັບປຸງ ເຮັດໃຫ້ປະສິດທິຜົນຂອງການເຮັດວຽກນັບມື້ນັບສູງຂຶ້ນ. ການກວດກາຕ້ອງດຳເນີນໄປຢ່າງຮອບດ້ານເປັນປົກກະຕິປະຈຳທິດ, ເດືອນ, ໄຕມາດ ແລະ ປະຈຳປີ ເປັນລະບົບຕໍ່ເນື່ອງ.

**ຫົວໜ້າຂະແໜງ**


ຂະແໜງລ້ຽງສັດ ແລະ ການປະມົງ ນະຄອນຫຼວງວຽງຈັນ, ໂທ 021 480 502; ເມລ໌: lf_vtc@yahoo.com

# ເອກະສານຊ້ອນທ້າຍ

ເອກະສານຊ້ອນທ້າຍ 01 : ສະຖິຕິສັດລ້ຽງແຕ່ລະປະເພດໃນນະຄອນຫຼວງວຽງຈັນ ປະຈໍາປີ 2021.

ຕາຕະລາງ 01: ສະຖິຕິສັດໃຫ່ຍ, ໝູ ແລະສັດປີກ.

ຕາຕະລາງ 01.01. ສະຖິຕິການລ້ຽງ (ລວມຟາມ).

| ລ/ດ | ເມືອງ | ຈໍານວນ (ໂຕ) | | | | | | |
|---|---|---|---|---|---|---|---|---|
| | | ມ້າ | ງົວ | ຄວາຍ | ແບ້ | ໝູ | ໝາ | ສັດປີກ |
| 1 | ຈັນທະບູລີ | 3 | 205 | 0 | 70 | 56 | 3.157 | 3.235 |
| 2 | ສີໂຄດຕະບອງ | 0 | 2.659 | 108 | 1.301 | 287 | 15.960 | 70.440 |
| 3 | ໄຊເສດຖາ | 15 | 3.665 | 800 | 1.017 | 2.977 | 2.810 | 43.625 |
| 4 | ສີສັດຕະນາກ | 10 | 362 | 14 | 85 | 18 | 2.558 | 3.582 |
| 5 | ນາຊາຍທອງ | 0 | 14.930 | 2.092 | 2.973 | 30.969 | 11.731 | 805.359 |
| 6 | ໄຊທານີ | 21 | 21.048 | 3.769 | 15.518 | 56.837 | 2.486 | 766.201 |
| 7 | ຫາດຊາຍຟອງ | 0 | 9.147 | 325 | 2.755 | 1.400 | 4.245 | 385.650 |
| 8 | ສັງທອງ | 0 | 19.902 | 3.796 | 3.790 | 9.881 | 2.773 | 156.536 |
| 9 | ປາກງື່ມ | 0 | 24.706 | 4.545 | 5.723 | 38.251 | 5.530 | 495.406 |
| ລວມ | | 49 | 96.624 | 15.449 | 33.232 | 140.676 | 51.250 | 2.730.034 |

ຕາຕະລາງ 01.02: ສະຖິຕິສັດນ້ຳ (ລວມຟາມ).

| ລ/ດ | ເມືອງ | ປາໜອງ | | ປາໜອງທຳມະຊາດ | | ປາມິນກະຊັງ | | ກົບ |
|---|---|---|---|---|---|---|---|---|
| | | ເນື້ອທີ່ (ເຮັກຕາ) | ປ່ອຍປາ (ໂຕ) | ເນື້ອທີ່ (ເຮັກຕາ) | ປ່ອຍປາ (ໂຕ) | ຈຳນວນ (ກະຊັງ) | ປ່ອຍປາ (ໂຕ) | ຈຳນວນ (ໂຕ) |
| 1 | ຈັນທະບູລີ | 5,11 | 255.600 | 0 | 0 | 0 | 0 | 55.000 |
| 2 | ສີໂຄດຕະບອງ | 115 | 5.750.000 | 20 | 200.000 | 0 | 0 | 50.000 |
| 3 | ໄຊເສດຖາ | 4,49 | 224.500 | 17 | 170.000 | 0 | 0 | 211.000 |
| 4 | ສີສັດຕະນາກ | 5 | 250.000 | 0 | 0 | 0 | 0 | 30.000 |
| 5 | ນາຊາຍທອງ | 677,7 | 33.885.000 | 18 | 180.000 | 50 | 200.000 | 7.180.000 |
| 6 | ໄຊທານີ | 700 | 35.000.000 | 0 | 0 | 2.326 | 9.304.000 | 185.000 |
| 7 | ຫາດຊາຍຟອງ | 37 | 1.850.000 | 1 | 10.000 | 150 | 600.000 | 510.000 |
| 8 | ສັງທອງ | 373 | 18.650.000 | 1.147 | 11.470.000 | 0 | 0 | 100.000 |
| 9 | ປາກງື່ມ | 240 | 12.000.000 | 334 | 3.340.000 | 50 | 200.000 | 118.000 |
| ລວມ | | 2.157,3 | 107.865.100 | 1.537 | 15.370.000 | 2.576 | 10.304.000 | 8.439.000 |

ຕາຕະລາງ 02: ສະຖິຕິຟາມລ້ຽງສັດແຕ່ລະປະເພດໃນນະຄອນຫຼວງຈັນ ປະຈຳປີ 2021. (ຟາມສັດໃຫ່ຍ)

| ລ/ດ | ເມືອງ | ມ້າ | | ງົວ | | ແບ້ | | ໝູ | |
|---|---|---|---|---|---|---|---|---|---|
| | | ຟາມ | ໂຕ | ຟາມ | ໂຕ | ຟາມ | ໂຕ | ຟາມ | ໂຕ |
| 1 | ຈັນທະບູລີ | 0 | 0 | 0 | 0 | 0 | 0 | 1 | 40 |
| 2 | ສີໂຄດຕະບອງ | 0 | 0 | 3 | 68 | 0 | 0 | 0 | 0 |
| 3 | ໄຊເສດຖາ | 0 | 0 | 3 | 110 | 0 | 0 | 1 | 1.200 |
| 4 | ສີສັດຕະນາກ | 0 | 0 | 0 | 0 | 0 | 0 | 0 | 0 |
| 5 | ນາຊາຍທອງ | 0 | 0 | 22 | 2.145 | 4 | 800 | 62 | 28.030 |
| 6 | ໄຊທານີ | 0 | 0 | 34 | 2.447 | 0 | 0 | 50 | 47.556 |
| 7 | ຫາດຊາຍຟອງ | 0 | 0 | 8 | 157 | 0 | 0 | 0 | 0 |
| 8 | ສັງທອງ | 0 | 0 | 23 | 1.490 | 0 | 0 | 3 | 5.848 |
| 9 | ປາກງື່ມ | 0 | 0 | 27 | 2.854 | 7 | 893 | 38 | 29.255 |
| ລວມ | | 0 | 0 | 120 | 9.271 | 11 | 1.693 | 155 | 111.929 |

(ຟາມສັດປີກ)

| ລ/ດ | ເມືອງ | ໄກ່ໄຂ່ | | ໄກ່ຊີ້ນ | | ເປັດພັນໄຂ່ | | ເປັດຊີ້ນ | | ນົກກະທາ | |
|---|---|---|---|---|---|---|---|---|---|---|---|
| | | ຟາມ | ໂຕ | ຟາມ | ໂຕ | ຟາມ | ໂຕ | ຟາມ | ໂຕ | ຟາມ | ໂຕ |
| 1 | ຈັນທະບູລີ | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 |
| 2 | ສີໂຄດຕະບອງ | 1 | 1.800 | 4 | 28.000 | 0 | 0 | 0 | 0 | 0 | 0 |
| 3 | ໄຊເສດຖາ | 1 | 2.000 | 3 | 16.000 | 2 | 4.000 | 0 | 0 | 0 | 0 |
| 4 | ສີສັດຕະນາກ | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 |
| 5 | ນາຊາຍທອງ | 124 | 420.700 | 24 | 197.000 | 9 | 18.200 | 1 | 7.000 | 0 | 0 |
| 6 | ໄຊທານີ | 56 | 444.650 | 13 | 73.835 | 14 | 16.800 | 2 | 1.930 | 1 | 4.500 |
| 7 | ຫາດຊາຍຟອງ | 2 | 10.000 | 0 | 0 | 2 | 7.000 | 0 | 0 | 0 | 0 |
| 8 | ສັງທອງ | 3 | 8.464 | 0 | 0 | 0 | 0 | 0 | 0 | 0 | 0 |
| 9 | ປາກງື່ມ | 7 | 24.865 | 3 | 26.000 | 15 | 46.800 | 5 | 12.700 | 1 | 230.000 |
| ລວມ | | 194 | 912.479 | 47 | 340.835 | 42 | 92.800 | 8 | 21.630 | 2 | 234.500 |

(ຟາມລ້ຽງສັດນ້ຳ)

| ລ/ດ | ເມືອງ | ປາໜອງ | | | ປານິນກະຊັງ | | |
|---|---|---|---|---|---|---|---|
| | | ຈຳນວນ (ຟາມ) | ເນື້ອທີ່ (ເຮັກຕາ) | ປ່ອຍປາ (ໂຕ) | ຈຳນວນ (ຟາມ) | ຈຳນວນ (ກະຊັງ) | ປ່ອຍປາ (ໂຕ) |
| 1 | ຈັນທະບູລີ | 0 | 0 | 0 | 0 | 0 | 0 |
| 2 | ສີໂຄດຕະບອງ | 1 | 1 | 50.000 | 0 | 0 | 0 |
| 3 | ໄຊເສດຖາ | 0 | 0 | 0 | 0 | 0 | 0 |
| 4 | ສີສັດຕະນາກ | 0 | 0 | 0 | 0 | 0 | 0 |
| 5 | ນາຊາຍທອງ | 14 | 43,56 | 2.178.000 | 1 | 50 | 200.000 |
| 6 | ໄຊທານີ | 10 | 43,93 | 2.196.500 | 34 | 2.326 | 9.304.000 |
| 7 | ຫາດຊາຍຟອງ | 0 | 0 | 0 | 2 | 150 | 600.000 |
| 8 | ສັງທອງ | 0 | 0 | 0 | 0 | 0 | 0 |
| 9 | ປາກງື່ມ | 1 | 1,2 | 60.000 | 1 | 50 | 200.000 |
| ລວມ | | 26 | 89,69 | 4.484.500 | 38 | 2.576 | 10.304.000 |

ຕາຕະລາງ 03: ການສັກຢາປ້ອງກັນພະຍາດໃຫ້ສັດລ້ຽງໃນນະຄອນຫຼວງວຽງຈັນ ປະຈໍາປີ 2021.

| ລ/ດ | ເມືອງ | ຈໍານວນ (ໂຕ) | | | | |
|---|---|---|---|---|---|---|
| | | ຄວາຍ | ງົວ | ແບ້ | ໝູ | ສັດປີກ |
| 1 | ຈັນທະບູລີ | 137 | 235 | 43 | 50 | 2.322 |
| 2 | ສີໂຄດຕະບອງ | 111 | 664 | 262 | 260 | 60.318 |
| 3 | ໄຊເສດຖາ | 442 | 890 | 191 | 3.315 | 20.312 |
| 4 | ສີສັດຕະນາກ | 0 | 316 | 40 | 10 | 949 |
| 5 | ນາຊາຍທອງ | 357 | 3.248 | 458 | 43.857 | 664.327 |
| 6 | ໄຊທານີ | 692 | 4.763 | 628 | 65.716 | 631.155 |
| 7 | ຫາດຊາຍຟອງ | 433 | 2.506 | 770 | 1.308 | 82.116 |
| 8 | ສັງທອງ | 677 | 4.320 | 796 | 20.234 | 964.36 |
| 9 | ປາກງື່ມ | 794 | 4.957 | 1.134 | 39.349 | 445.466 |
| ລວມ | | 3.643 | 21.899 | 4.322 | 174.099 | 2.003.401 |
| % ທຽບໃສ່ຝູງສັດ | | | | | | |

ຕາຕະລາງ 04: ການລະບາດພະຍາດສັດແຕ່ລະປະເພດໃນນະຄອນຫຼວງວຽງຈັນ ປະຈຳປີ 2021.

| ລ/ດ | ເມືອງ | ຊະນິດພະຍາດ | | | | | | | | | | | |
|---|---|---|---|---|---|---|---|---|---|---|---|---|---|
| | | ເຕົ້າໂຮມເລືອດ | | | | ປາກເປື່ອຍລີ້ນເລັບ | | | | ໄຂ້ບວມ | | | |
| | | ງົວ | | ຄວາຍ | | ງົວ | | ແບ້ | | ງົວ | | ຄວາຍ | |
| | | ເຈັບ | ຕາຍ | ເຈັບ | ຕາຍ | ເຈັບ | ຕາຍ | ເຈັບ | ຕາຍ | ເຈັບ | ຕາຍ | ເຈັບ | ຕາຍ |
| 1 | ຈັນທະບູລີ | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 |
| 2 | ສີໂຄດຕະບອງ | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 |
| 3 | ໄຊເສດຖາ | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 |
| 4 | ສີສັດຕະນາກ | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 |
| 5 | ນາຊາຍທອງ | 0 | 0 | 13 | 13 | 0 | 0 | 0 | 0 | 0 | 0 | 0 | 0 |
| 6 | ໄຊທານີ | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 |
| 7 | ຫາດຊາຍຟອງ | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 |
| 8 | ສັງທອງ | 10 | 9 | 0 | 0 | 90 | 2 | 2 | 0 | 1 | 1 | 1 | 1 |
| 9 | ປາກງື່ມ | 3 | 1 | 0 | 0 | 447 | 2 | 28 | 0 | 0 | 0 | 0 | 0 |
| ລວມ | | 13 | 10 | 13 | 13 | 537 | 4 | 30 | 0 | 1 | 1 | 1 | 1 |

| ລ/ດ | ເມືອງ | ຊະນິດພະຍາດ | | | | | | | | | |
|---|---|---|---|---|---|---|---|---|---|---|---|
| | | ພິວໜັງອັກເສບ | | | | ອະຫິວາໝູອາຟຣິກາ | | | ອະຫິວາສັດປີກ | | |
| | | ງົວ | | ໝູ | | ໝູ | | | ໄກ່ | | |
| | | ເຈັບ | ຕາຍ | ເຈັບ | ຕາຍ | ເຈັບ | ຕາຍ | ຂ້າທຳລາຍ | ເຈັບ | ຕາຍ | ຂ້າທຳລາຍ |
| 1 | ຈັນທະບູລີ | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 |
| 2 | ສີໂຄດຕະບອງ | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 |
| 3 | ໄຊເສດຖາ | 359 | 0 | 3 | 0 | 0 | 0 | 0 | 0 | 0 | 0 |
| 4 | ສີສັດຕະນາກ | 69 | 0 | 0 | 0 | 0 | 0 | 0 | 0 | 0 | 0 |
| 5 | ນາຊາຍທອງ | 81 | 0 | 0 | 0 | 54 | 23 | 31 | 0 | 0 | 0 |
| 6 | ໄຊທານີ | 800 | 0 | 0 | 0 | 0 | 0 | 0 | 26 | 26 | 0 |
| 7 | ຫາດຊາຍຟອງ | 43 | 0 | 0 | 0 | 0 | 0 | 0 | 0 | 0 | 0 |
| 8 | ສັງທອງ | 5 | 0 | 0 | 0 | 0 | 0 | 0 | 0 | 0 | 0 |
| 9 | ປາກງື່ມ | 1127 | 25 | 0 | 0 | 147 | 147 | 0 | 0 | 0 | 0 |
| ລວມ | | 2484 | 25 | 3 | 0 | 201 | 170 | 31 | 26 | 26 | 0 |

ຕາຕະລາງ 05: ການສະໜອງທາດຊີ້ນຢູ່ນະຄອນຫຼວງວຽງຈັນ ປະຈໍາປີ 2021.

| ລ/ດ | ເມືອງ | ການສະໜອງທາດຊີ້ນຢູ່ນະຄອນຫຼວງວຽງຈັນ (ໂຕນ) | | | | | | |
|---|---|---|---|---|---|---|---|---|
| | | ຊີ້ນຄວາຍ | ຊີ້ນງົວ | ຊີ້ນແບ້ | ຊີ້ນໝູ | ຊີ້ນສັດປີກ | ໄຂ່ | ຊີ້ນປາ |
| 1 | ຈັນທະບູລີ | 1,88 | 3,62 | 0,16 | 4,54 | 4,34 | 0 | 31,17 |
| 2 | ສີໂຄດຕະບອງ | 1,52 | 41,74 | 4,38 | 23,60 | 117,20 | 23,73 | 731,50 |
| 3 | ໄຊເສດຖາ | 6,07 | 55,88 | 3,19 | 300,89 | 34,02 | 76,76 | 52,89 |
| 4 | ສີສັດຕະນາກ | 0 | 4,86 | 0,14 | 0,90 | 1,77 | 0 | 30,50 |
| 5 | ນາຊາຍທອງ | 26,74 | 204,03 | 7,64 | 3.980,72 | 1313,17 | 6.125,51 | 4.423,08 |
| 6 | ໄຊທານີ | 51,73 | 299,24 | 10,47 | 5.964,77 | 1101,98 | 5.783,26 | 14.974,50 |
| 7 | ຫາດຊາຍຟອງ | 5,94 | 157,45 | 12,85 | 118,72 | 149,26 | 80,85 | 1.013,52 |
| 8 | ສັງທອງ | 50,69 | 271,46 | 13,27 | 1.836,56 | 178,32 | 35,59 | 3.995,80 |
| 9 | ປາກງື່ມ | 59,42 | 311,40 | 18,91 | 3.571,54 | 612,51 | 1.083,71 | 2.253,32 |
| | ລວມ | 203,99 | 1.349,68 | 71,01 | 15.802,24 | 3.512,57 | 13.209,41 | 27.506,28 |

ຕາຕະລາງ 06: ສັງລວມການບໍລິໂພກທາດຊີ້ນຢູ່ນະຄອນຫຼວງວຽງຈັນ ປະຈໍາປີ 2021.

| ລ/ດ | ລາຍການ | ແຫຼ່ງສະໜອງທາດຊີ້ນ (ໂຕນ) | | | | |
|---|---|---|---|---|---|---|
| | | ນະຄອນຫຼວງວຽງຈັນ | | ນໍາເຂົ້າ ຕ່າງແຂວງ | ນໍາເຂົ້າ ຕ່າງປະເທດ | ລວມບໍລິໂພກ |
| | | ຜະລິດທັງໝົດ | ສົ່ງອອກຕ່າງແຂວງ | | | |
| 1 | ຊີ້ນຄວາຍ | 203,99 | 2,15 | 180,36 | 105,26 | 487,46 |
| 2 | ຊີ້ນງົວ | 1.349,68 | 45,56 | 653,02 | 33,25 | 1.990,4 |
| 3 | ຊີ້ນແບ້/ແກະ | 71,01 | 0,18 | 181,94 | 6,64 | 259,41 |
| 4 | ຊີ້ນໝູ | 15.802,24 | 227,70 | 2.894,91 | 8,9 | 18.478,35 |
| 5 | ຊີ້ນສັດປີກ | 3.512,57 | 31,23 | 0 | 904,66 | 4386 |
| 6 | ຊີ້ນປາ-ສັດນໍ້າ | 27.589,36 | 540 | 365 | 0 | 27.414,36 |
| 7 | ໄຂ່ | 13.209,42 | 1.476,83 | 0 | 0 | 11.732,57 |
| 8 | ອາຫານທະເລ | 0 | 0 | 0 | 562,32 | 562,32 |
| 9 | ນົມສົດ | 78,11 | 0 | 0 | 0 | 78,11 |
| 10 | ອື່ນໆ | 0 | 127,17 | 0 | 0 | -127,17 |
| **ລວມທັງໝົດ** | | 61.816,38 | 2.450,82 | 4.275,23 | 1.621,03 | 65.261,81 |

ຕາຕະລາງ 07: ສະຖິຕິສັດຕະອະແພດບ້ານໃນນະຄອນຫຼວງວຽງຈັນ ປະຈໍາປີ 2021.

| ລ/ດ | ເມືອງ | ຈໍານວນສັດຕະອະແພດບ້ານ (ໂຕນ) | | | | |
|---|---|---|---|---|---|---|
| | | ຝຶກທັງໝົດ | ຍິງ | ຝຶກໃໝ່ | ເຄື່ອນໄຫວ | ຍິງ |
| 1 | ຈັນທະບູລີ | 4 | 2 | 0 | 4 | 1 |
| 2 | ສີໂຄດຕະບອງ | 29 | 1 | 0 | 29 | 1 |
| 3 | ໄຊເສດຖາ | 5 | 0 | 0 | 5 | 0 |
| 4 | ສີສັດຕະນາກ | 1 | 0 | 0 | 1 | 0 |
| 5 | ນາຊາຍທອງ | 77 | 0 | 0 | 54 | 0 |
| 6 | ໄຊທານີ | 147 | 1 | 0 | 147 | 1 |
| 7 | ຫາດຊາຍຟອງ | 8 | 0 | 0 | 8 | 0 |
| 8 | ສັງທອງ | 66 | 0 | 0 | 66 | 0 |
| 9 | ປາກງື່ມ | 87 | 0 | 22 | 65 | 0 |
| ລວມ | | 402 | 4 | 22 | 379 | 3 |

ຕາຕະລາງ 08: ສັງລວມການນໍາເຂົ້າ-ສົ່ງອອກສັດ, ຜະລິດຕະພັນສັດ, ອາຫານສັດແລະອື່ນໆ.

1) ສັງລວມການສົ່ງອອກສັດ ແລະ ຜະລິດຕະພັນສັດ.

| ລ/ດ | ລາຍການ | ຫົວໜ່ວຍ | ຈໍານວນ |
|---|---|---|---|
| 1 | ຄວາຍ | ໂຕ | 23 |
| 2 | ງົວ | ໂຕ | 563 |
| 3 | ແບ້ | ໂຕ | 11 |
| 4 | ໝູພໍ່ພັນ | ໂຕ | 5 |
| 5 | ໝູແມ່ພັນ | ໂຕ | 1.336 |
| 6 | ໝູນ້ອຍ | ໂຕ | 85.742 |
| 7 | ໝູຊີ້ນ | ໂຕ | 3.503 |
| 8 | ໄກ່ແມ່ສາວພັນໄຂ່ | ໂຕ | 125.710 |
| 9 | ໄກ່ນ້ອຍພັນໄຂ່ | ໂຕ | 44.700 |
| 10 | ໄກ່ນ້ອຍສາມສາຍເລືອດ | ໂຕ | 411.700 |
| 11 | ໄກ່ນ້ອຍລາດ | ໂຕ | 740.700 |
| 12 | ໄກ່ຊີ້ນ | ໂຕ | 32.530 |
| 13 | ເປັດແມ່ສາວພັນໄຂ່ | ໂຕ | 5.700 |
| 14 | ໄຂ່ໄກ່ | ໂຕນ | 1.477 |
| 15 | ປານິນລ້ຽງໃນກະຊັງ | ໂຕນ | 540 |
| 16 | ຜະລິດຕະພັນສັດ | ໂຕນ | 127 |

2) ສັງລວມການກວດກາການນຳເຂົ້າແນວພັນສັດ.

| ລ/ດ | ລາຍການ | ຫົວໜ່ວຍ | ຈຳນວນ |
|---|---|---|---|
| 1 | ມ້າ | ໂຕ | 2 |
| 2 | ງົວພໍ່ພັນ | ໂຕ | 16 |
| 3 | ງົວແມ່ພັນ | ໂຕ | 845 |
| 4 | ໝູພໍ່ພັນ | ໂຕ | 91 |
| 5 | ໝູແມ່ພັນ | ໂຕ | 3.105 |
| 6 | ໝູນ້ອຍ | ໂຕ | 2.000 |
| 7 | ໄກ່ແມ່ສາວພັນໄຂ່ | ໂຕ | 295.840 |
| 8 | ໄກ່ນ້ອຍພັນໄຂ່ | ໂຕ | 248.800 |
| 9 | ໄກ່ນ້ອຍພັນໄຂ່ໂຕຜູ້ | ໂຕ | 764.200 |
| 10 | ໄກ່ນ້ອຍສາມສາຍເລືອດ | ໂຕ | 842.000 |
| 11 | ໄກ່ນ້ອຍລາດ | ໂຕ | 832 |
| 12 | ເປັດແມ່ສາວພັນໄຂ | ໂຕ | 47.600 |
| 13 | ເປັດນ້ອຍພັນຊີ້ນ | ໂຕ | 16.600 |
| 14 | ໄຂ່ໄກ່ (ພໍ່ແມ່ພັນ) | ໜ່ວຍ | 55.080 |
| 15 | ປານ້ອຍ | ໂຕ | 7.210.000 |
| 16 | ນົ້ເຜິ້ງ | ໂຕ | 600.000 |

3) ສັງລວມການກວດກາການນຳເຂົ້າອາຫານສັດ ແລະ ສ່ວນປະສົມອາຫານສັດ.

| ລ/ດ | ລາຍການ | ຈຳນວນ (ໂຕນ) | |
|---|---|---|---|
| | | ນ້ອຍ | ໃຫຍ່ |
| 1 | ອາຫານໝູ | 15.827,80 | 5.662,40 |
| 2 | ອາຫານໄກ່ | 6.477,19 | 4.496,50 |
| 3 | ອາຫານປາ | 3.524,80 | 5.962,30 |
| 4 | ອາຫານມ້າ | 50 | |
| 5 | ອາຫານງົວ | 28 | |
| 6 | ອາຫານໝາ | 628,72 | |
| 7 | ອາຫນແມວ | 124,39 | |
| 8 | ອາຫານປາຄາບ | 42,37 | |
| 9 | ອາຫານນົກ | 25,57 | |
| 10 | ອາຫານກະຕ່າຍ | 12,48 | |
| 11 | ສ່ວນປະສົມອາຫານສັດ | 1.659,30 | |
| 12 | ຊີ້ນກະດູກປົ່ນ | 1.365,71 | |

| | | |
|---|---|---|
| 13 | ປາປົ່ນ | 90 |
| 14 | ແຮ່ທາດ | 771,68 |
| 15 | ເກືອປະສົມອາຫານ | 180 |
| 16 | ທາງນົມຝົງປະສົມອາຫານສັດ | 60,50 |
| 17 | ສານຮັກສາຄຸນນະພາບອາຫານສັດ | 98 |
| 18 | ອາຫານເສີມ | 1.463,56 |

4) ສັງລວມການກວດກາການນຳເຂົ້າຢາສຳລັບສັດ ແລະ ອຸປະກອນຮັບໃຊ້ຟາຍໃນຟາມ.

| ລ/ດ | ລາຍການ | ຫົວໜ່ວຍ | ຈຳນວນ |
|---|---|---|---|
| 1 | ວັກຊີນ | ໂດຣ | 16.591.008 |
| 2 | ຢາກັນພະຍາດ | ຊີຊີ | 23.428.152 |
| 3 | ວິຕາມິນ | ໂຕນ | 115.35 |
| 4 | ຢາຕ້ານເຊື້ອ | ຊີຊີ | 444.478 |
| 5 | ຢາປົວພະຍາດ | ຊີຊີ | 19.531.876 |
| 6 | ຢາລົດໄຂ້ | ຊີຊີ | 304.800 |
| 7 | ຢາບຳລຸງ | ຊີຊີ | 296.180 |
| 8 | ທາດເຫຼັກ | ຊີຊີ | 1.455.000 |
| 9 | ຢາຂ້າກາຝາກ | ຊີຊີ | 1.039.660 |
| 10 | ຢາເພີ່ມຮໍໂມນ | ໂດຣ | 121.260 |
| 11 | ນ້ຳກັ່ນ | ຊີຊີ | 1.372.272 |
| 12 | ຢາຂ້າເຊື້ອ | ຊີຊີ | 11.352.652 |

5) ສັງລວມການກວດກາການນຳເຂົ້າອາຫານທະເລ, ສິ້ນສ່ວນສັດ, ປາ ແລະ ຜະລິດຕະພັນສັດ.

| ລ/ດ | ລາຍການ | ຈຳນວນ (ກິໂລກຣາມ) |
|---|---|---|
| 1 | ກຸ້ງ | 134.256 |
| 2 | ປາມຶກ | 109.580 |
| 3 | ປາທູ | 32.780 |
| 4 | ປາແຊວມອນ | 56.115 |
| 5 | ປາດໍລີ | 93.000 |
| 6 | ປາຊະບະ | 6.500 |
| 7 | ຫອຍແຄງ | 70.228 |
| 8 | ຫອຍນາງລົມ | 2100 |
| 9 | ຫອຍແມງຜູ່ | 1.710 |
| 10 | ປູ | 56.050 |
| 11 | ຊີ້ນຄວາຍ | 105.260 |

| | | |
|---|---|---|
| 12 | ຊີ້ນງົວ | 33.250 |
| 13 | ສີ້ນສ່ວນແກະ | 6.640 |
| 14 | ສີ້ນສ່ວນໝູ | 8.900 |
| 15 | ສີ້ນສ່ວນສັດປີກ | 904.657 |

ຕາຕະລາງ 09: ແຜນການຂະຫຍາຍຝູງສັດລ້ຽງ ປະຈຳປີ 2022

| ລ/ດ | ເມືອງ | ແຜນການຂະຫຍາຍຝູງສັດລ້ຽງ (ໂຕ) | | | | |
|---|---|---|---|---|---|---|
| | | ງົວ | ຄວາຍ | ແບ້ | ໝູ | ສັດປີກ |
| 1 | ຈັນທະບູລີ | 211 | 0 | 71 | 59 | 3.429 |
| 2 | ສີໂຄດຕະບອງ | 2.739 | 110 | 1.328 | 304 | 74.666 |
| 3 | ໄຊເສດຖາ | 3.775 | 816 | 1.038 | 3.156 | 46.243 |
| 4 | ສີສັດຕະນາກ | 373 | 14 | 87 | 19 | 3.797 |
| 5 | ນາຊາຍທອງ | 15.378 | 2.134 | 3.032 | 32.828 | 853.681 |
| 6 | ໄຊທານີ | 21.679 | 3.844 | 15.828 | 60.247 | 812.173 |
| 7 | ຫາດຊາຍຟອງ | 9.421 | 332 | 2.810 | 1.484 | 408.789 |
| 8 | ສັງທອງ | 20.499 | 3.872 | 3.866 | 10.474 | 165.928 |
| 9 | ປາກງື່ມ | 25.448 | 4.636 | 5.837 | 40.546 | 525.130 |
| ລວມ | | 99.523 | 15.758 | 33.897 | 149.117 | 2.893.836 |

ຕາຕະລາງ 10: ຄວາມຕ້ອງການທາດຊີ້ນ ແລະ ຄວາມອາດສາມາດສະໜອງທາດຊີ້ນ ປີ 2022

| ລ/ດ | ລາຍການ | ຄວາມຕ້ອງການທາດຊີ້ນ (ໂຕນ) | ຄວາມອາດສາມາດສະໜອງທາດຊີ້ນ (ໂຕນ) | ດຸ່ນດ່ຽງຄວາມຕ້ອງການແລະຄວາມອາດສາມາດສະໜອງທາດຊີ້ນ (ໂຕນ |
|---|---|---|---|---|
| 1 | ຊີ້ນງົວ | 2.269,35 | 1.485,57 | - 783,78 |
| 2 | ຊີ້ນຄວາຍ | 790,96 | 216,67 | - 574,29 |
| 3 | ຊີ້ນແບ້ | 71,12 | 126,12 | 54,99 |
| 4 | ຊີ້ນໝູ | 19.088,49 | 15.892,17 | - 3.196,32 |
| 5 | ຊີ້ນສັດປີກ | 8.034,75 | 4.444,53 | - 3.590,21 |
| 6 | ໄຂ່ | 8.743,36 | 14.363,47 | 5620,11 |
| 7 | ປາ ແລະ ສັດນ້ຳ | 26.300,28 | 28.776,05 | 2.475,78 |
| 8 | ນົມ | 2.735,56 | 63,88 | - 2.671,69 |
| ລວມ | | 68.033,87 | 65.368,46 | - 2.665,41 |

ຕາຕະລາງ 11: ແຜນການສັກຢາກັນພະຍາດສັດ ປີ 2022

| ລ/ດ | ເມືອງ | ສະນິດສັດ (ໂຕ) | | | | |
|---|---|---|---|---|---|---|
| | | ງົວ | ຄວາຍ | ແບ້ | ໝູ | ສັດປີກ |
| 1 | ຈັນທະບູລີ | 211 | 0 | 71 | 59 | 2.572 |
| 2 | ສີໂຄດຕະບອງ | 1.917 | 110 | 995 | 304 | 56.000 |
| 3 | ໄຊເສດຖາ | 3.775 | 816 | 778 | 3.156 | 34.682 |
| 4 | ສີສັດຕະນາກ | 373 | 11 | 87 | 19 | 2.848 |
| 5 | ນາຊາຍທອງ | 11.533 | 1.600 | 2.274 | 32.827 | 640.260 |
| 6 | ໄຊທານີ | 16.260 | 2.883 | 11.872 | 60.247 | 609.130 |
| 7 | ຫາດຊາຍຟອງ | 7.066 | 332 | 2.108 | 1.484 | 306.592 |
| 8 | ສັງທອງ | 15.375 | 2.904 | 2.899 | 10.475 | 124.446 |
| 9 | ປາກງື່ມ | 19.085 | 3.477 | 4.378 | 40.546 | 393.847 |
| ລວມ | | 75.595 | 12.133 | 25.462 | 14.9117 | 2.170.377 |